**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ........../ສພຊ

ນະຄອນຫຼວງວຽງຈັນ, ວັນທີ ................

**(ຮ່າງ)**

# ກົດໝາຍ
# ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ
**(ສະບັບປັບປຸງ)**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາກ່ຽວກັບວຽກງານ ນາຍທະຫານ ເພື່ອເຮັດໃຫ້ນາຍທະຫານມີຄວາມ ໜັກແໜ້ນທາງດ້ານການເມືອງ ແນວຄິດ, ມີຄວາມເຕີບໃຫຍ່, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ເປັນກຳລັງຫຼັກແຫຼ່ງໃນການກຽມພ້ອມສູ້ຮົບ ແລະ ສູ້ຮົບ, ແນໃສ່ເຮັດໃຫ້ປະເທດຊາດມີສະຖຽນລະພາບ, ຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ຮັບປະກັນໃນການປົກປັກຮັກສາເອກະລາດ, ອຳນາດອະທິປະໄຕ, ຄວາມໝັ້ນຄົງຂອງຊາດ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາ ປະເທດຊາດ.

**ມາດຕາ 2 (ປັບປຸງ) ນາຍທະຫານກອງທັບປະຊາຊົນລາວ**

ນາຍທະຫານກອງທັບປະຊາຊົນລາວ ແມ່ນ ພະນັກງານຂອງພັກ ແລະ ລັດ ທີ່ມີຊັ້ນ ແຕ່ ຮ້ອຍຈັດຕະວາ ເຖິງ ພົນເອກ ໂດຍມີເຄື່ອງໝາຍຊັ້ນ, ເຄື່ອງໝາຍທຽບຊັ້ນ, ເຄື່ອງໝາຍເຫຼົ່າຮົບ ແລະ ເຄື່ອງແບບສະເພາະ.

ນາຍທະຫານກອງທັບປະຊາຊົນລາວ ຊຶ່ງຕໍ່ໄປເອີ້ນວ່າ ນາຍທະຫານ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊັ້ນນາຍທະຫານ** ໝາຍເຖິງ ຊັ້ນຮ້ອຍຈັດຕະວາ, ຮ້ອຍຕີ, ຮ້ອຍໂທ, ຮ້ອຍເອກ, ພັນຈັດຕະວາ, ພັນຕີ, ພັນໂທ, ພັນເອກ, ພົນຈັດຕະວາ, ພົນຕີ, ພົນໂທ ແລະ ພົນເອກ;
2. **ການປະດັບຊັ້ນ** ໝາຍເຖິງ ການມອບຊັ້ນ ໃຫ້ຜູ້ຮຽນຈົບ ໂຮງຮຽນນາຍທະຫານ ແລະ ຜູ້ມີຜົນງານດີເດັ່ນ;
3. **ການປະດັບທຽບຊັ້ນ** ໝາຍເຖິງ ການມອບທຽບຊັ້ນ ໃຫ້ຜູ້ຮຽນຈົບວິຊາສະເພາະ ນອກກອງທັບ;
4. **ການເລື່ອນຊັ້ນ** ໝາຍເຖິງ ການຂຶ້ນຊັ້ນ ສູງກວ່າຊັ້ນເກົ່າໃຫ້ຜູ້ເຮັດໜ້າທີ່ນຳພາບັນຊາ, ຜູ້ໄດ້ຮຽນຈົບຈາກໂຮງຮຽນນາຍທະຫານ ທັງພາຍໃນ ແລະ ຕ່າງປະເທດ;

5. **ການເລື່ອນທຽບຊັ້ນ** ໝາຍເຖິງ ການຂຶ້ນທຽບຊັ້ນສູງກວ່າຊັ້ນເກົ່າ ໃຫ້ຜູ້ເຮັດໜ້າທີ່ວິຊາສະເພາະຕ່າງໆ, ຜູ້ບໍ່ໄດ້ເຮັດໜ້າທີ່ນໍາພາ, ບັນຊາ ແລະ ບໍ່ໄດ້ຮຽນຜ່ານໂຮງຮຽນນາຍທະຫານ;

6. **ເຂດຫຍຸ້ງຍາກທຸລະກັນດານ** ໝາຍເຖິງ ເຂດຫ່າງໄກສອກຫຼີກ, ໂຄງລ່າງພື້ນຖານບໍ່ສະດວກ;

7. **ການລ້ຽງດູທັບ** ໝາຍເຖິງ ວຽກງານຮັບປະກັນພະລາທິການຮອບດ້ານ ເປັນຕົ້ນ ການຮັບປະກັນວັດຖຸ, ຊີວິດການເປັນຢູ່, ເສນາຮັກ, ວຽກງານຂົນສົ່ງ ແລະ ການຮັບປະກັນອື່ນຈໍານວນໜຶ່ງຂອງພະລາທິການລວມ;

8. **ຫ້ອງໜ້າກອງບັນຊາການທະຫານເຫຼົ່າຮົບ** ໝາຍເຖິງ ຫ້ອງໜ້າການເມືອງ ແລະ ຫ້ອງໜ້າການທະຫານ ເຫຼົ່າຮົບ;

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານນາຍທະຫານ**

ລັດ ຊຸກຍູ້, ສົ່ງເສີມ, ສ້າງ ແລະ ປະຕິບັດນະໂຍບາຍ ກ່ຽວກັບວຽກງານນາຍທະຫານ ໃຫ້ເຕີບໃຫຍ່ເຂັ້ມແຂງ ຮອບດ້ານ, ມີຄວາມໜັກແໜ້ນທາງດ້ານການເມືອງ ແນວຄິດ, ຄວາມຮູ້, ຄວາມສາມາດ, ລະດັບວິທະຍາສາດ, ເຕັກໂນໂລຊີ, ສ້າງເງື່ອນໄຂ ໃຫ້ນາຍທະຫານໄດ້ເຄື່ອນໄຫວວຽກງານ ແລະ ເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ, ຈິດໃຈ ເພື່ອຮັບ ປະກັນໃຫ້ນາຍທະຫານ ເຮັດສໍາເລັດໜ້າທີ່ ໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

**ມາດຕາ 5 (ປັບປຸງ) ຫຼັກການ ການເຄື່ອນໄຫວວຽກງານ ນາຍທະຫານ**

ການເຄື່ອນໄຫວວຽກງານ ນາຍທະຫານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນການເຄົາລົບ ແລະ ປະຕິບັດຖືກຕ້ອງ, ສອດຄ່ອງກັບແນວທາງ ຂອງພັກ, ນະໂຍບາຍຂອງລັດ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ ຂອງກອງທັບ;
2. ຢູ່ພາຍໃຕ້ການນໍາພາ ຊີ້ນໍາ, ບັນຊາ ເດັດຂາດ ໂດຍກົງ, ຮອບດ້ານ ຂອງພັກປະຊາຊົນ ປະຕິວັດລາວ, ຄະນະພັກກະຊວງປ້ອງກັນປະເທດ ແລະ ຄະນະພັກ, ຄະນະບັນຊາແຕ່ລະຂັ້ນ;
3. ລວມສູນປະຊາທິປະໄຕ, ເປັນເອກະພາບໃນທົ່ວກອງທັບ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານສົມທົບຢ່າງແໜ້ນແຟ້ນ ກົມກຽວ ລະຫວ່າງກໍາລັງຫຼວງ ແລະ ກໍາລັງທ້ອງຖິ່ນ;
4. ຮັບປະກັນ ການສ້າງ, ບັນຈຸ, ສັບຊ້ອນ ນາຍທະຫານ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມຄວາມຮູ້ຄວາມສາມາດ;
5. ຮັກສາຄວາມລັບຂອງຊາດ ແລະ ຄວາມລັບທາງການທະຫານ ຢ່າງເດັດຂາດ;
6. ຮັບປະກັນ ຄວາມສະເໝີພາບ, ໂປ່ງໃສ, ຍຸຕິທໍາ ແລະ ສາມາດກວດສອບໄດ້.

**ມາດຕາ 6 ການປົກປ້ອງນາຍທະຫານ**

ນາຍທະຫານກອງທັບປະຊາຊົນລາວ ໄດ້ຮັບການປົກປ້ອງຕາມກົດໝາຍ ເມື່ອຖືກກ່າວຫາ, ຖືກຮ້ອງຟ້ອງ, ຖືກໃສ່ຮ້າຍ, ຖືກນາບຂູ່ ໃນເຄື່ອນໄຫວວຽກງານ ແລະ ປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ, ຕາມການມອບໝາຍຂອງການຈັດຕັ້ງ.

**ມາດຕາ 7 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບ ນາຍທະຫານກອງທັບປະຊາຊົນລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ເປັນຕົ້ນ ປະເທດເພື່ອນມິດ ຍຸດທະສາດ ກ່ຽວກັບວຽກງານນາຍທະຫານ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ຄົ້ນຄວ້າ ວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມ, ສໍາມະນາ, ທັດສະນະສຶກສາ ແລະ ການຍົກລະດັບຄວາມຮູ້ ຄວາມສາມາດທາງດ້ານວິຊາການ ເພື່ອສ້າງ ແລະ ພັດທະນາ ນາຍທະຫານ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ.

## ພາກທີ II
## ນາຍທະຫານກອງທັບປະຊາຊົນລາວ
## ໝວດທີ 1
## ພາລະບົດບາດ, ໜ້າທີ່, ຄວາມຮັບຜິດຊອບ, ສິດ ແລະ ພັນທະ ຂອງນາຍທະຫານ

**ມາດຕາ 9 (ປັບປຸງ) ພາລະບົດບາດຂອງນາຍທະຫານ**

ນາຍທະຫານ ເປັນກໍາລັງຫຼັກແຫຼ່ງຂອງກອງທັບປະຊາຊົນລາວ, ມີພາລະບົດບາດ ນໍາພາ ຊີ້ນໍາ, ບັນຊາ, ຄຸ້ມຄອງ, ຕິດຕາມ ກວດກາ, ສຶກສາອົບຮົມ, ຝຶກຝົນຮໍ່າຮຽນ, ກໍ່ສ້າງກໍາລັງ, ກຽມພ້ອມສູ້ຮົບ, ສູ້ຮົບ, ລ້ຽງດູທັບ ແລະ ຮັບປະກັນເຕັກນິກການທະຫານ ເພື່ອປົກປັກຮັກສາເອກະລາດ, ອໍານາດອະທິປະໄຕ, ຄວາມໝັ້ນຄົງຂອງຊາດ, ລະບອບປະຊາທິປະໄຕປະຊາຊົນ ແລະ ປະກອບສ່ວນເຂົ້າ ໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

**ມາດຕາ 10 ໜ້າທີ່ ຂອງນາຍທະຫານ**

ນາຍທະຫານ ມີ ໜ້າທີ່ ດັ່ງນີ້:

1. ປະຕິບັດ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການຂອງກອງທັບ, ຮັກສາຄວາມລັບຂອງລັດ, ຂອງກອງທັບຢ່າງເດັດຂາດ, ປະຕິບັດ ຄໍາສັ່ງຂອງຜູ້ບັນຊາ, ນໍາພາ ແລະ ການຈັດຕັ້ງຂັ້ນເທິງຂອງຕົນ ຢ່າງເຂັ້ມງວດ;
2. ກຽມພ້ອມສູ້ຮົບ ແລະ ສູ້ຮົບຢ່າງພິລະອາດຫານ ເພື່ອປົກປັກຮັກສາປະເທດຊາດ, ຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງລະບອບປະຊາທິປະໄຕ ປະຊາຊົນ, ປົກປັກຮັກສາຊັບສິນບັດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງລວມໝູ່ ແລະ ຂອງປະຊາຊົນລາວບັນດາເຜົ່າ;
3. ຕັ້ງໜ້າປັບປຸງ ແລະ ກໍ່ສ້າງກໍາລັງ ໃຫ້ໜັກແໜ້ນທາງດ້ານການເມືອງ ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ມີທາດແທ້ປະຕິວັດ, ມີລະບຽບວິໄນເຂັ້ມງວດ ແລະ ມີແບບແຜນທັນສະໄໝ; ມີລະດັບວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ສິລະປະຍຸດ, ຍຸດທະວິທີໃນການສູ້ຮົບ ແລະ ມີຄວາມສາມາດປະຕິບັດສໍາເລັດໜ້າທີ່;
4. ກໍ່ສ້າງຮາກຖານການເມືອງ, ເຂົ້າຮ່ວມການພັດທະນາທາງດ້ານເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ຊ່ວຍເຫຼືອປະຊາຊົນລາວບັນດາເຜົ່າ ເປັນຕົ້ນໃນເວລາເກີດໄພພິບັດ;
5. ຄຸ້ມຄອງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງນາຍ ແລະ ພົນທະຫານ ບົນພື້ນຖານຍົກສູງຈິດໃຈເພິ່ງຕົນເອງ ກຸ້ມຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ກໍ່ສ້າງແນວຫຼັງພະລາທິການ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ;
6. ຄຸ້ມຄອງ, ປົກປັກຮັກສາ, ບົວລະບັດ ສ້ອມແປງ, ດັດແປງ ພາຫະນະ, ອາວຸດຍຸດໂທ ປະກອບເຕັກນິກການທະຫານ;

7. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ມີຄວາມສາມັກຄີເປັນເອກະພາບພາຍໃນກອງ ທັບ ແລະ ປະຊາຊົນ, ຕໍານິຕິຊົມ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຢູ່ພາຍໃນກົມກອງ ແລະ ລະຫວ່າງຂັ້ນລຸ່ມ ກັບຂັ້ນເທິງ ເພື່ອພ້ອມກັນກ້າວໜ້າ;

8. ຄົ້ນຄວ້າວິທະຍາສາດ-ເຕັກນິກ, ເຕັກໂນໂລຊີ ທາງດ້ານການທະຫານ;

9. ເປັນຜູ້ ສັງເກດການ, ເຈລະຈາ, ໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງລັດກັບລັດ, ທີ່ປຶກສາ ແລະ ເປັນກໍາລັງຮັກສາສັນຕິພາບ ຕາມການຕົກລົງຂອງລັດຖະບານ;

10. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 11 ຄວາມຮັບຜິດຊອບຂອງນາຍທະຫານ**

ນາຍທະຫານ ມີຄວາມຮັບຜິດຊອບ ນໍາພາ ຊີ້ນໍາ, ບັນຊາ, ຄຸ້ມຄອງກົມກອງຂອງຕົນ, ປະຕິບັດແນວທາງ ນະໂຍບາຍ, ກົດໝາຍ, ລະບຽບການຂອງກອງທັບ, ມະຕິ, ຄໍາສັ່ງຂອງຂັ້ນເທິງຢ່າງເຂັ້ມງວດ ແລະ ມີຄວາມຮັບຜິດຊອບຕໍ່ຄໍາສັ່ງຂອງຕົນ.

ໃນຍາມສູ້ຮົບ ຕ້ອງປະຕິບັດຄໍາສັ່ງຂອງຜູ້ບັນຊາ ຢ່າງເຂັ້ມງວດ ແລະ ເດັດຂາດ.

**ມາດຕາ 12 (ປັບປຸງ) ສິດ ແລະ ພັນທະຂອງນາຍທະຫານ**

ນາຍທະຫານມີ ສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ທີ່ຈໍາເປັນ;

2. ຕໍານິຕິຊົມ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ປະກອບຄໍາເຫັນ ໃນການປັບປຸງກໍ່ສ້າງກົມກອງ;

3. ໄດ້ຮັບການສຶກສາ, ຍົກລະດັບ ທາງດ້ານການເມືອງ, ການທະຫານ, ພະລາທິການ, ເຕັກນິກການທະຫານ ແລະ ວິຊາສະເພາະອື່ນ;

4. ຕົກລົງ ແລະ ຕັດສິນບັນຫາຕ່າງໆ ຕາມຂອບເຂດຄວາມຮັບຜິດຊອບ ແລະ ຕາມການມອບໝາຍ;

5. ໄດ້ຮັບນະໂຍບາຍ ຕາມລະບຽບການ ຂອງກອງທັບປະຊາຊົນລາວ;

6. <u>ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ .</u>

ນາຍທະຫານ ມີພັນທະ ດັ່ງນີ້:

1. ຄົ້ນຄວ້າ <u>ເຊື່ອມຊຶມ</u>, ກໍາແໜ້ນ ແລະ ເປັນແບບຢ່າງ ປະຕິບັດແນວທາງ<u>ຂອງພັ</u>ກ, ນະໂຍບາຍ<u>ຂອງລັດ</u> ກົດໝາຍ ແລະ ລະບຽບການຂອງກອງທັບປະຊາຊົນລາວ;

2. ກຽມພ້ອມສູ້ຮົບ, ສູ້ຮົບຢ່າງພິລະອາດຫານ, ຍອມເສຍສະລະຊີວິດ ເພື່ອຜົນປະໂຫຍດ ຂອງປະເທດຊາດ ແລະ ຂອງປະຊາຊົນລາວບັນດາເຜົ່າ;

3. ເປັນເຈົ້າການປະຕິບັດໜ້າທີ່ ປົກປັກຮັກສາລະບອບ ປະຊາທິປະໄຕປະຊາຊົນ ແລະ ເຂົ້າຮ່ວມໃນການສ້າງສາປະເທດຊາດ;

4. ຝຶກຝົນ, ຫຼໍ່ຫຼອມຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ເປັນແບບຢ່າງໃນທຸກ ວຽກງານ; ຝຶກແອບຮໍ່າຮຽນ, ຍົກສູງລະດັບຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ການທະຫານ, ເສດຖະກິດ, ເຕັກນິກ, ເຕັກໂນໂລຊີ, ວັດທະນະທໍາ-ສັງຄົມ ແລະ ວິຊາສະເພາະອື່ນ ເພື່ອເຮັດສໍາເລັດໜ້າທີ່ ທີ່ໄດ້ຮັບມອບໝາຍ;

5. ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ປະຕິບັດຄໍາສັ່ງຂອງຜູ້ບັນຊາ ຢ່າງເຂັ້ມງວດ ແລະ ເດັດຂາດ;

6. ເຄົາລົບນັບຖືຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ຂອງເຜົ່າ;

7. <u>ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.</u>

## ໝວດທີ 2
## ປະເພດ, ທີ່ມາ, ເງື່ອນໄຂ ແລະ ມາດຕະຖານ ຂອງນາຍທະຫານ

**ມາດຕາ 13 ປະເພດນາຍທະຫານ**

ປະເພດນາຍທະຫານກອງທັບປະຊາຊົນລາວ ມີ ດັ່ງນີ້:

1. ນາຍທະຫານການເມືອງ ຊຶ່ງແມ່ນ ນາຍທະຫານ ທີ່ເຮັດໜ້າທີ່ວຽກງານພັກ, ວຽກງານ ການເມືອງ ໃນກອງທັບ;

2. ນາຍທະຫານເສນາທິການ ຊຶ່ງແມ່ນ ນາຍທະຫານ ທີ່ເຮັດໜ້າທີ່ບັນຊາ, ຄຸ້ມຄອງ, ປັບປຸງ, ກໍ່ສ້າງກຳລັງທາງດ້ານການທະຫານ ກຽມພ້ອມສູ້ຮົບ ແລະ ສູ້ຮົບມີໄຊ;

3. ນາຍທະຫານພະລາທິການ ຊຶ່ງແມ່ນ ນາຍທະຫານ ທີ່ເຮັດໜ້າທີ່ຮັບປະກັນ ໃນການລ້ຽງດູ ທັບ;

4. ນາຍທະຫານເຕັກນິກ ຊຶ່ງແມ່ນ ນາຍທະຫານ ທີ່ເຮັດໜ້າທີ່ຮັບປະກັນເຕັກນິກການທະຫານ;

5. ນາຍທະຫານວິຊາສະເພາະອື່ນ ຊຶ່ງແມ່ນ ນາຍທະຫານທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ 1, 2, 3 ແລະ ຂໍ້ 4 ຂອງມາດຕານີ້.

**ມາດຕາ 14 ທີ່ມາຂອງນາຍທະຫານ**

ທີ່ມາຂອງນາຍທະຫານ ມີ ດັ່ງນີ້:

1. ນາຍສິບ ທີ່ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ສູ້ຮົບຢ່າງພິລະອາດຫານ, ຫ້າວຫັນ ແລະ ມີຜົນງານດີເດັ່ນ ໃນການເຄື່ອນໄຫວວຽກງານ ແລະ ປະຕິບັດໜ້າທີ່;

2. ນາຍສິບ ທີ່ຮຽນຈົບວິຊາສະເພາະໃດໜຶ່ງ ລະດັບຊັ້ນກາງຂຶ້ນໄປ ຢູ່ໃນ ແລະ ນອກກອງທັບ ທັງພາຍໃນ ແລະ ຕ່າງປະເທດ;

3. ພະນັກງານ-ລັດຖະກອນ ທີ່ຖືກເລືອກເຟັ້ນຕາມຄວາມຕ້ອງການເຂົ້າມາເຮັດໜ້າທີ່ຮັບໃຊ້ໃນກອງທັບ;

4. ນັກສຶກສາ ນອກກອງທັບ ທີ່ຮຽນຈົບຊັ້ນກາງຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ ທີ່ ໄດ້ຮັບການຄັດເລືອກເຂົ້າເປັນທະຫານອາຊີບ.

**ມາດຕາ 15 ເງື່ອນໄຂ ແລະ ມາດຕະຖານ ຂອງນາຍທະຫານ**

ເງື່ອນໄຂ ແລະ ມາດຕະຖານ ຂອງນາຍທະຫານ ມີ ດັ່ງນີ້:

1. ຕ້ອງເປັນຄົນເຊື້ອຊາດ ແລະ ສັນຊາດລາວ, ມີອາຍຸແຕ່ ຊາວເອັດປີ ຂຶ້ນໄປ, ມີຊີວະປະຫວັດຈະແຈ້ງ ທີ່ກຳເນີດຈາກຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານບັນດາເຜົ່າ, ບໍ່ຖືກສານຕັດສິນ ລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ;

2. ມີທັດສະນະຫຼັກໝັ້ນການເມືອງຂອງຊົນຊັ້ນກຳມະກອນໜັກແໜ້ນ, ມີຄວາມຈົງຮັກ ພັກດີຕໍ່ພັກ, ລັດ ແລະ ປະຊາຊົນ, ມີອຸດົມການສັງຄົມນິຍົມ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ, ຈຳແນກໄດ້ມິດ ແລະ ສັດຕູ ຢ່າງຈະແຈ້ງ, ມີຄຸນສົມບັດສິນທຳປະຕິວັດ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງກອງທັບຢ່າງເຂັ້ມງວດ, ມີນ້ຳໃຈ ຕໍ່ສູ້ເດັດດ່ຽວຢ່າງພິລະອາດຫານ, ມີຄວາມເສຍສະລະສູງ ແລະ ທົນທານໝັ້ນຽວແໜ້ນ;

3. ມີຄວາມຮູ້ພື້ນຖານທິດສະດີມາກ-ເລນິນ, ແນວຄິດໄກສອນພົມວິຫານ, ມີຄວາມສາມາດກຳແໜ້ນ ແລະ ຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງກອງທັບ;

4. ມີຄວາມຮູ້ເປັນລະບົບກ່ຽວກັບວິຊາການທະຫານ, ວິຊາສະເພາະເຕັກນິກ, ໄດ້ຜ່ານການທົດສອບໃນວຽກງານຕົວຈິງ;

5. ມີສຸຂະພາບດີ.

ສຳລັບ ນາຍທະຫານບັນຊາແຕ່ລະຂັ້ນ ຕ້ອງໄດ້ຮຽນຜ່ານ ຫຼື ຈົບ ຫຼັກສູດ ດັ່ງນີ້:

1. ຂັ້ນໝວດ, ກອງຮ້ອຍ, ກອງພັນນ້ອຍ ຫຼື ທຽບເທົ່າ ຕ້ອງໄດ້ຮຽນຜ່ານ ຫຼື ຈົບຫຼັກສູດ ການເມືອງ, ການທະຫານ, ພະລາທິການ ຫຼື ເຕັກນິກ ຂັ້ນໝວດ, ກອງຮ້ອຍ, ກອງພັນນ້ອຍ ຂຶ້ນໄປ;

2. ຂັ້ນກອງພັນໃຫຍ່, ກອງພົນນ້ອຍ, ກອງພົນໃຫຍ່, ເຫຼົ່າຮົບ, ກອງບັນຊາການທະຫານ ນະຄອນຫຼວງ ແຂວງ ແລະ ທຽບເທົ່າຂຶ້ນໄປ ຕ້ອງໄດ້ຮຽນຜ່ານ ຫຼື ຈົບຫຼັກສູດ ການເມືອງ, ການທະຫານ, ພະລາທິການ ຫຼື ເຕັກນິກ ຂັ້ນກອງພັນໃຫຍ່, ກອງພົນ ຂຶ້ນໄປ.

## ໝວດທີ 3
## ການນຳພາ, ບັນຊາ ແລະ ການສ້າງ ນາຍທະຫານ

### ມາດຕາ 16 (ປັບປຸງ) ການນຳພາ ແລະ ບັນຊາ ນາຍທະຫານ

ນາຍທະຫານກອງທັບປະຊາຊົນລາວ ຢູ່ພາຍໃຕ້ການນຳພາ ເດັດຂາດ, ໂດຍກົງ, ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ.

ປະທານປະເທດ ເປັນປະທານຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສູນກາງ, ເປັນແມ່ທັບກຳລັງປະກອບອາວຸດປະຊາຊົນ.

ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຮອງປະທານຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບສູນກາງ ທັງເປັນຜູ້ປະຈຳການ ແລະ ເປັນຜູ້ນຳພາ, ບັນຊາການສູງສຸດ ຂອງນາຍທະຫານກອງທັບປະຊາຊົນລາວ.

ຫົວໜ້າກົມໃຫຍ່ ຫຼື ທຽບເທົ່າ ເປັນຜູ້ນຳພາ, ບັນຊາ, ຄຸ້ມຄອງ, ກວດກາ ການປະຕິບັດໜ້າທີ່ ໂດຍກົງ ຕາມເຫຼົ່າຮົບວິຊາສະເພາະ ຕໍ່ນາຍທະຫານກອງທັບປະຊາຊົນລາວ.

ຫົວໜ້າກອງບັນຊາການທະຫານເຫຼົ່າຮົບ ເປັນຜູ້ນຳພາ, ບັນຊາ, ຄຸ້ມຄອງ, ກວດກາ ການປະຕິບັດໜ້າທີ່ ໂດຍກົງ ຕາມເຫຼົ່າຮົບວິຊາສະເພາະ.

ຫົວໜ້າກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ເປັນຮອງປະທານຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ນະຄອນຫຼວງ, ແຂວງ, ເປັນຜູ້ນຳພາ ບັນຊາ, ຄຸ້ມຄອງ, ກວດກາການປະຕິບັດໜ້າທີ່ ໂດຍກົງ ຕໍ່ນາຍທະຫານ ຢູ່ໃນຂັ້ນຮັບຜິດຊອບຂອງຕົນ;

ລະບົບການບັນຊາຂອງນາຍທະຫານ ປະກອບມີ ການບັນຊາລະບົບຫົວໜ້າດຽວ ແລະ ການບັນຊາລະບົບສອງຫົວໜ້າ.

### ມາດຕາ 17 (ໃໝ່) ການບັນຊາລະບົບຫົວໜ້າດຽວ

ການບັນຊາລະບົບຫົວໜ້າດຽວ ແມ່ນ ການບັນຊາໂດຍ ລັດຖະມົນຕີ, ຫົວໜ້າກົມໃຫຍ່, ຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າກົມວິທະຍາສາດ-ປະຫວັດສາດການທະຫານ, ຫົວໜ້າຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສູນກາງ, ບັນດາຫົວໜ້າກົມ ແລະ ຫົວໜ້າຫ້ອງ ທີ່ຂຶ້ນກັບກົມໃຫຍ່ ແລະ ຫ້ອງວ່າການກະຊວງ.

### ມາດຕາ 18 (ໃໝ່) ການບັນຊາລະບົບສອງຫົວໜ້າ

ການບັນຊາລະບົບສອງຫົວໜ້າ ແມ່ນ ລະບົບການນຳພາ, ບັນຊາ ຢູ່ກົມກອງກຳລັງຫຼວງ ກຳລັງທ້ອງຖິ່ນ ໂດຍ ຫົວໜ້າການເມືອງ, ຫົວໜ້າການທະຫານ.

ຫົວໜ້າການເມືອງ ນຳພາ ວຽກງານພັກ ວຽກງານການເມືອງ.

ຫົວໜ້າການທະຫານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ຜັນຂະຫຍາຍມະຕິການນໍາພາ, ບັນຊາ ວຽກງານ ເສນາທິການ, ພະລາທິການ, ເຕັກນິກ, ປັບປຸງ ກໍ່ສ້າງກໍາລັງ ກຽມພ້ອມສູ້ຮົບ ແລະ ສູ້ຮົບ.

ຫົວໜ້າການເມືອງ, ຫົວໜ້າການທະຫານ ມີບົດບາດ ເທົ່າທຽມກັນ. ສໍາລັບ ສິດ ແລະ ໜ້າທີ່ ຂອງຫົວໜ້າການເມືອງ ແລະ ຫົວໜ້າການທະຫານ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 19 (ປັບປຸງ) ການສ້າງນາຍທະຫານ**

ການສ້າງນາຍທະຫານ ແມ່ນ ຄວາມຮັບຜິດຊອບຂອງພາກສ່ວນຕ່າງໆ ດັ່ງນີ້:

1. ພັກ, ລັດຖະບານ ມີຄວາມຮັບຜິດຊອບໂດຍກົງ ຕໍ່ການສ້າງ, ບໍາລຸງ ນາຍທະຫານກອງທັບປະຊາຊົນລາວ;

2. ຄະນະພັກ, ຄະນະບັນຊາຂັ້ນຕ່າງໆຢູ່ໃນກອງທັບ ມີຄວາມຮັບຜິດຊອບໂດຍກົງ ຕໍ່ການສ້າງ, ບໍາລຸງ ນາຍທະຫານທີ່ຂຶ້ນກັບຕົນ ໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ປະຊາຊົນ, ມີຄວາມຮູ້ຄວາມສາມາດ, ມີລະບຽບວິໄນ ແລະ ແບບແຜນທັນສະໄໝ;

3. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ, ສະຖາບັນການສຶກສາພາກລັດ, ເອກະຊົນ ແລະ ພົນລະເມືອງລາວ ມີຄວາມຮັບຜິດຊອບໃນການປະກອບສ່ວນສ້າງ, ບໍາລຸງ ແລະ ສຶກສາອົບຮົມ ນາຍທະຫານກອງທັບປະຊາຊົນລາວ.

## ໝວດທີ 4
## ຂັ້ນ ແລະ ຊັ້ນ ຂອງນາຍທະຫານ

**ມາດຕາ 20 (ປັບປຸງ) ຂັ້ນ ແລະ ຊັ້ນ ຂອງນາຍທະຫານ**

ນາຍທະຫານກອງທັບປະຊາຊົນລາວ ມີ ສາມຂັ້ນ ຄື ຂັ້ນນາຍຮ້ອຍ, ຂັ້ນນາຍພັນ ແລະ ຂັ້ນນາຍພົນ ແລະ ມີ ສິບສອງ ຊັ້ນ ດັ່ງນີ້:

ຂັ້ນນາຍຮ້ອຍ ມີ ສີ່ ຊັ້ນ:
- ຊັ້ນ ຮ້ອຍຈັດຕະວາ;
- ຊັ້ນ ຮ້ອຍຕີ;
- ຊັ້ນ ຮ້ອຍໂທ;
- ຊັ້ນ ຮ້ອຍເອກ.

ຂັ້ນນາຍພັນ ມີ ສີ່ ຊັ້ນ:
- ຊັ້ນ ພັນຈັດຕະວາ;
- ຊັ້ນ ພັນຕີ;
- ຊັ້ນ ພັນໂທ;
- ຊັ້ນ ພັນເອກ.

ຂັ້ນນາຍພົນ ມີ ສີ່ ຊັ້ນ:
- ຊັ້ນ ພົນຈັດຕະວາ;
- ຊັ້ນ ພົນຕີ;
- ຊັ້ນ ພົນໂທ;
- ຊັ້ນ ພົນເອກ.

**ມາດຕາ 21 (ປັບປຸງ) ເງື່ອນໄຂການເລື່ອນຊັ້ນ ຂອງນາຍທະຫານ**

ການເລື່ອນຊັ້ນ ຂອງນາຍທະຫານ ມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເຖິງກໍານົດເວລາພິຈາລະນາການເລື່ອນຊັ້ນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້;

2. ມີຜົນສໍາເລັດໃນການປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍ ຫຼື ມີຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ;

3. ມີເງື່ອນໄຂ ແລະ ມາດຕະຖານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ແລະ ມາດຕາ 22 ຂອງກົດໝາຍສະບັບນີ້.

ການເລື່ອນຊັ້ນພັນໂທ ຂຶ້ນ ຊັ້ນພັກເອກ ໃຫ້ປະຕິບັດຕາມຂໍ້ 7 ຂອງມາດຕາ 22 ແລະ ຂໍ້ 5 , ຂໍ້ 6 ຂອງມາດຕາ 27 ກົດໝາຍສະບັບນີ້.

ສໍາລັບ ການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ຂອງນາຍທະຫານຊັ້ນຮ້ອຍໂທ ຂຶ້ນ ຊັ້ນຮ້ອຍເອກນັ້ນຕ້ອງແມ່ນສະມາຊິກພັກສົມບູນ.

**ມາດຕາ 22 (ປັບປຸງ) ກໍານົດເວລາ ການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ຂອງນາຍທະຫານ**

ການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ຂອງນາຍທະຫານ ໃຫ້ປະຕິບັດຕາມກໍານົດເວລາ ດັ່ງນີ້:

| | |
|---|---|
| 1. ຊັ້ນ ຮ້ອຍຈັດຕະວາ ຂຶ້ນ ຮ້ອຍຕີ | ກໍານົດ ສອງ ປີ; |
| 2. ຊັ້ນ ຮ້ອຍຕີ ຂຶ້ນ ຮ້ອຍໂທ | ກໍານົດ ສອງ ປີ; |
| 3. ຊັ້ນ ຮ້ອຍໂທ ຂຶ້ນ ຮ້ອຍເອກ | ກໍານົດ ສອງ ປີ; |
| 4. ຊັ້ນ ຮ້ອຍເອກ ຂຶ້ນ ພັນຈັດຕະວາ | ກໍານົດ ສາມ ປີ; |
| 5. ຊັ້ນ ພັນຈັດຕະວາ ຂຶ້ນ ພັນຕີ | ກໍານົດ ສາມ ປີ; |
| 6. ຊັ້ນ ພັນຕີ ຂຶ້ນ ພັນໂທ | ກໍານົດ ສີ່ ປີ; |
| 7. ຊັ້ນ ພັນໂທ ຂຶ້ນ ພັນເອກ | ກໍານົດ ສີ່ ປີ. |

ການເລື່ອນຊັ້ນພັນເອກ ຂຶ້ນ ຊັ້ນນາຍພົນ, ຊັ້ນນາຍພົນ ຂຶ້ນ ຊັ້ນນາຍພົນຕາມລໍາດັບຊັ້ນ ແມ່ນບໍ່ມີກໍານົດເວລາ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 27 ຂອງກົດໝາຍສະບັບນີ້.

ໃນໄລຍະເວລາທີ່ນາຍທະຫານສຶກສາຢູ່ ພາຍໃນ ແລະ ຕ່າງປະເທດ ໃຫ້ຄິດໄລ່ໃສ່ກໍານົດເວລາການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ.

ສໍາລັບ ນາຍທະຫານ ທີ່ມີຜົນງານດີເດັ່ນໃນການສູ້ຮົບ, ໃນການປະຕິບັດໜ້າທີ່ຢູ່ເຂດຫຍຸ້ງຍາກທຸລະກັນດານ ຫຼື ໜ້າທີ່ພິເສດ ຈະໄດ້ຮັບການເລື່ອນຊັ້ນ, ເລື່ອນທຽບຊັ້ນ ຫຼື ຂ້າມຊັ້ນ ກ່ອນເວລາ ທີ່ໄດ້ກໍານົດໄວ້ ແຕ່ຕ້ອງມີກໍານົດເວລາເຄິ່ງໜຶ່ງຂຶ້ນໄປ ຂອງກໍານົດເວລາການເລື່ອນຊັ້ນ. ສ່ວນການເລື່ອນຊັ້ນ, ເລື່ອນທຽບຊັ້ນ ຫຼື ຂ້າມຊັ້ນ ໃຫ້ນາຍທະຫານ ທີ່ມີຜົນງານດີເດັ່ນໃນການສູ້ຮົບ, ໃນການປະຕິບັດໜ້າທີ່ຢູ່ເຂດຫຍຸ້ງຍາກ ທຸລະກັນດານ ຫຼື ໜ້າທີ່ພິເສດ ແມ່ນໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ສໍາລັບ ນາຍທະຫານ ທີ່ໄປປະຕິບັດໜ້າທີ່ຢູ່ຝ່າຍພົນລະເຮືອນ ເມື່ອກັບຄືນກອງທັບ ຈະໄດ້ພິຈາລະນາເລື່ອນຊັ້ນ, ເລື່ອນທຽບຊັ້ນ ຕາມຄວາມເໝາະສົມ ແລະ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 21 ແລະ ມາດຕາ 28 ຂອງກົດໝາຍສະບັບນີ້.

ໃນກໍລະນີຮອດກຳນົດເວລາການເລື່ອນຊັ້ນ, ເລື່ອນທຽບຊັ້ນແລ້ວ ແຕ່ບໍ່ມີ ເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງກົດໝາຍສະບັບນີ້ ຈະບໍ່ໄດ້ຄົ້ນຄວ້າ, ພິຈາລະນາເລື່ອນຊັ້ນ, ເລື່ອນທຽບຊັ້ນ ແຕ່ຈະໄດ້ຮັບການຍົກຂັ້ນເງິນເດືອນ ຕາມມາດຕາ 33 ຂອງກົດໝາຍສະບັບນີ້.

**ມາດຕາ 23 (ປັບປຸງ) ສິດຕົກລົງກ່ຽວກັບຊັ້ນ ຂອງນາຍທະຫານ**

ສິດຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ, ທຽບຊັ້ນ, ເລື່ອນທຽບຊັ້ນ ແລະ ປົດຊັ້ນ ຂອງນາຍທະຫານ ມີດັ່ງນີ້:

1. ປະທານປະເທດ ເປັນຜູ້ຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ ແລະ ປົດຊັ້ນ ຂັ້ນນາຍພົນ ຕາມການສະເໜີຂອງນາຍົກລັດຖະມົນຕີ;

2. ນາຍົກລັດຖະມົນຕີ ເປັນຜູ້ຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ ແລະ ປົດຊັ້ນ ພັນເອກ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ;

3. ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຜູ້ຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ, ເລື່ອນທຽບຊັ້ນ ແລະ ປົດຊັ້ນ ພັນຕີ ແລະ ພັນໂທ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງກອງທັບ;

4. ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ຫົວໜ້າກົມໃຫຍ່ການເມືອງກອງທັບ ເປັນຜູ້ຕົກລົງ ປະດັບ ຊັ້ນ, ເລື່ອນຊັ້ນ, ເລື່ອນທຽບຊັ້ນ ແລະ ປົດຊັ້ນ ຮ້ອຍເອກ ແລະ ພັນຈັດຕະວາ ຕາມການສະເໜີຂອງກົມໃຫຍ່ການເມືອງກອງທັບ;

5. ຫົວໜ້າກົມໃຫຍ່ການເມືອງກອງທັບ ເປັນຜູ້ຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ, ທຽບຊັ້ນ, ເລື່ອນທຽບຊັ້ນ ແລະ ປົດຊັ້ນ ຮ້ອຍຈັດຕະວາ, ຮ້ອຍຕີ ແລະ ຮ້ອຍໂທ ຕາມການສະເໜີຂອງກົມພະນັກງານ.

**ມາດຕາ 24 (ປັບປຸງ) ການປະດັບຊັ້ນ ແລະ ປະດັບທຽບຊັ້ນ ເປັນນາຍທະຫານ**

ການປະດັບຊັ້ນ ແລະ ປະດັບທຽບຊັ້ນ ເປັນນາຍທະຫານ ໃຫ້ປະຕິບັດ ດັ່ງນີ້:

1. ນາຍສິບ ທີ່ໄດ້ຮຽນຈົບວິຊາສະເພາະ ຈາກບັນດາວິທະຍາຄານ ແລະ ໂຮງຮຽນ ຂອງກອງທັບ ທັງພາຍໃນ ແລະ ຕ່າງປະເທດ ຈະໄດ້ຮັບການປະດັບຊັ້ນ ເປັນນາຍທະຫານ ຕາມວຸດທິການສຶກສາ ຄື:

1.1. ຊັ້ນກາງ ປະດັບ ຊັ້ນ ຮ້ອຍຈັດຕະວາ;

1.2. ຊັ້ນສູງ ຂຶ້ນໄປ ປະດັບຊັ້ນ ຮ້ອຍຕີ.

2. ນາຍສິບທີ່ໄດ້ຮຽນຈົບວິຊາສະເພາະ ນອກກອງທັບ ທັງພາຍໃນ ແລະ ຕ່າງປະເທດ ຕາມແຜນກໍ່ສ້າງຂອງກອງທັບ ພາຍຫຼັງຮຽນຈົບມາຮັບໃຊ້ ຢູ່ໃນກອງທັບ ຕາມສາຍວິຊາສະເພາະ ເປັນເວລາ ໜຶ່ງປີ ຂຶ້ນໄປ ຈະໄດ້ຮັບການຄົ້ນຄວ້າ, ພິຈາລະນາ ປະດັບທຽບຊັ້ນ ເປັນນາຍທະຫານ ຕາມວຸດທິການສຶກສາ ຄື:

2.1. ຊັ້ນກາງ ປະດັບທຽບຊັ້ນ ຮ້ອຍຈັດຕະວາ;

2.2. ຊັ້ນສູງ ຂຶ້ນໄປ ປະດັບທຽບຊັ້ນ ຮ້ອຍຕີ.

3. ນາຍສິບທີ່ມີຜົນງານດີເດັ່ນ ມີຄວາມສາມາດ ໃນການ ນຳພາ, ບັນຊາ, ສູ້ຮົບ ຫຼື ການປະຕິບັດໜ້າທີ່ອື່ນ ຈະໄດ້ຮັບການຄົ້ນຄວ້າ, ພິຈາລະນາປະດັບຊັ້ນ ຮ້ອຍຈັດຕະວາ ຫຼື ຮ້ອຍຕີ ຕາມຄວາມເໝາະສົມ;

4. ນັກສຶກສາ ທີ່ໄດ້ຮຽນຈົບວິຊາສະເພາະ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືກເລືອກເຟັ້ນ ຕາມຄວາມຕ້ອງການ ຂອງໜ້າທີ່ວຽກງານໃນກອງທັບ ຕາມສາຍວິຊາສະເພາະທີ່ໄດ້ຮຽນມາ ຊຶ່ງໄດ້ຜ່ານການຮັບໃຊ້ໃນກອງທັບ ເປັນໄລຍະເວລາ ສາມປີຂຶ້ນໄປ ແລະ ຕ້ອງໄດ້ ຮຽນວິຊາການທະຫານຂັ້ນພື້ນຖານ ຫົກ ເດືອນຂຶ້ນໄປ ຈະໄດ້ຮັບການຄົ້ນຄວ້າ, ພິຈາລະນາ ປະດັບທຽບຊັ້ນ ເປັນນາຍທະຫານ ຕາມວຸດທິການສຶກສາ ຄື:

4.1. ຊັ້ນກາງ ປະດັບທຽບຊັ້ນ ຮ້ອຍຈັດຕະວາ;

4.2. ຊັ້ນສູງ ຂຶ້ນໄປ ປະດັບທຽບຊັ້ນ ຮ້ອຍຕີ.

5. ພະນັກງານ-ລັດຖະກອນ ທີ່ຖືກເລືອກເຟັ້ນຕາມຄວາມຕ້ອງການ ເຂົ້າມາເຮັດໜ້າທີ່ຮັບໃຊ້ ໃນກອງທັບ ຕາມສາຍວິຊາສະເພາະ ຈະໄດ້ຮັບການທຽບຊັ້ນ ຕາມຊັ້ນ, ຂັ້ນເງິນເດືອນ ທີ່ຍົກຍ້າຍມາຈາກ ຝ່າຍປົກຄອງ ແລະ ອີງຕາມການຕົກລົງໃຫ້ຕຳແໜ່ງໃນກອງທັບ.

**ມາດຕາ 25 (ໃໝ່) ການເລື່ອນຊັ້ນ ພັນໂທ ຂຶ້ນຊັ້ນ ພັນເອກ ໃຫ້ນາຍທະຫານ ຊ່ຽວຊານສະເພາະທາງ**

ການເລື່ອນຊັ້ນ ພັນໂທ ຂຶ້ນຊັ້ນ ພັນເອກ ໃຫ້ນາຍທະຫານ ຊ່ຽວຊານສະເພາະທາງ ເປັນຕົ້ນ ຄູ, ແພດປິ່ນປົວ, ນັກສິລະປິນອາຊີບ, ນັກບິນ, ນັກຄົ້ນຄວ້າວິທະຍາສາດ-ເຕັກນິກການທະຫານ ຕ້ອງແມ່ນຜູ້ທີ່ມີຜົນງານພົ້ນເດັ່ນ, ມີຜະລິດຕະພັນ ອອກຮັບໃຊ້ ກອງທັບ, ສັງຄົມ ໂດຍໄດ້ຮັບການຍອມຮັບ ແລະ ຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ.

ສຳລັບມາດຖານ, ເງື່ອນໄຂ ການເລື່ອນຊັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 26 (ໃໝ່) ການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ຂອງນາຍທະຫານຊ່ອຍວຽກ**

ການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ຂອງນາຍທະຫານ ຊ່ອຍວຽກ ບັນດາ ກົມໃຫຍ່ ແລະ ຫ້ອງວ່າການກະຊວງ, ກອງບັນຊາການທະຫານເຫຼົ່າຮົບ ແລະ ກົມກອງທຽບເທົ່າ ສູງສຸດບໍ່ໃຫ້ເກີນຊັ້ນ ພັນໂທ.

ການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ຂອງນາຍທະຫານ ຊ່ອຍວຽກ ບັນດາ ກອງພົນ, ກອງບັນຊາການທະຫານນະຄອນຫຼວງ, ແຂວງ, ກອງພັນໃຫຍ່ ແລະ ກົມກອງທຽບເທົ່າ ສູງສຸດບໍ່ໃຫ້ເກີນຊັ້ນ ພັນຕີ.

## ໝວດທີ 5
## ຕຳແໜ່ງບັນຊາ ຂອງນາຍທະຫານກອງທັບປະຊາຊົນລາວ

**ມາດຕາ 27 (ປັບປຸງ) ຕຳແໜ່ງບັນຊາ ຂອງນາຍທະຫານ**

ຕຳແໜ່ງ ຂອງນາຍທະຫານ ກອງທັບປະຊາຊົນລາວ ມີ ດັ່ງນີ້:

1. ລັດຖະມົນຕີ ກະຊວງປ້ອງກັນປະເທດ ມີຖານະທຽບເທົ່າ ຮອງນາຍົກລັດຖະມົນຕີ;
2. ຫົວໜ້າກົມໃຫຍ່ການເມືອງກອງທັບ ແລະ ຫົວໜ້າກົມໃຫຍ່ເສນາທິການກອງທັບ ມີຖານະທຽບເທົ່າ ລັດຖະມົນຕີ ຂອງບັນດາກະຊວງ;
3. ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ທີ່ບໍ່ຄວບຕຳແໜ່ງ ມີຖານະທຽບເທົ່າ ຮອງລັດຖະມົນຕີ ຂອງບັນດາກະຊວງ;
4. ຫົວໜ້າ ກົມໃຫຍ່ພະລາທິການກອງທັບ, ກົມໃຫຍ່ເຕັກນິກກອງທັບ, ຫ້ອງວ່າການກະຊວງ;
5. ຫົວໜ້າກອງບັນຊາການທະຫານເຫຼົ່າຮົບ;
6. ຫົວໜ້າ ກົມ ຂຶ້ນກັບກົມໃຫຍ່ ແລະ ຫ້ອງວ່າການກະຊວງ, ຫົວໜ້າ ກອງພົນ, ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ;
7. ຫົວໜ້າ ກອງພັນໃຫຍ່, ກອງບັນຊາການທະຫານ ເມືອງ, ນະຄອນ;
8. ຫົວໜ້າ ກອງພັນນ້ອຍ;
9. ຫົວໜ້າ ກອງຮ້ອຍ;
10. ຫົວໜ້າ ໝວດ.

**ມາດຕາ 28 (ປັບປຸງ) ການກຳນົດຊັ້ນໃສ່ຕຳແໜ່ງບັນຊາ ຂອງນາຍທະຫານ**

ການກຳນົດຊັ້ນໃສ່ຕຳແໜ່ງບັນຊາ ຂອງນາຍທະຫານ ມີ ດັ່ງນີ້:

1. ຊັ້ນ ພົນເອກ: ລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ ແລະ ຫົວໜ້າກົມໃຫຍ່ເສນາທິການກອງທັບ;

2. ຊັ້ນ ພົນໂທ: ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ ແລະ ຮອງຫົວໜ້າກົມໃຫຍ່ເສນາທິການກອງທັບ;

3. ຊັ້ນ ພົນຕີ: ຫົວໜ້າກົມໃຫຍ່ພະລາທິການກອງທັບ, ຫົວໜ້າກົມໃຫຍ່ເຕັກນິກກອງທັບ, ຫົວໜ້າຫ້ອງວ່າການກະຊວງ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ຫົວໜ້າກອງບັນຊາການທະຫານເຫຼົ່າຮົບ, ຫົວໜ້າວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ, ຫົວໜ້າກົມ 213, ຫົວໜ້າກົມວິທະຍາສາດ-ປະຫວັດສາດ ການທະຫານ, ຫົວໜ້າຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສູນກາງ;

4. ຊັ້ນ ພົນຈັດຕະວາ: ຮອງຫົວໜ້າກົມໃຫຍ່ພະລາທິການກອງທັບ, ຮອງຫົວໜ້າກົມໃຫຍ່ເຕັກນິກກອງທັບ, ຮອງຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າກົມ ຂຶ້ນກັບກົມໃຫຍ່ ແລະ ຫ້ອງວ່າການກະຊວງ, ຫົວໜ້າອົງການໄອຍະການທະຫານຂັ້ນສູງ, ປະທານສານທະຫານຂັ້ນສູງ, ຫົວໜ້າກອງພົນ, ຮອງຫົວໜ້າວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ, ຮອງປະທານກຳມາທິການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ຮອງຫົວໜ້າຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສູນກາງ, ຮອງຫົວໜ້າກົມ 213, ຮອງຫົວໜ້າກົມວິທະຍາສາດ-ປະຫວັດສາດ ການທະຫານ, ຮອງຫົວໜ້າກອງບັນຊາການ ທະຫານເຫຼົ່າຮົບ, ຫົວໜ້າ ກອງບັນຊາການທະຫານນະຄອນຫຼວງ, ແຂວງ, ບັນດາຫົວໜ້າວິທະຍາຄານ, ໂຮງໝໍສູນກາງ 103, ໂຮງຮຽນ ທິດສະດີການເມືອງກອງທັບ, ໂຮງຮຽນ ກໍ່ສ້າງນາຍສິບທະຫານຮາບ ເລກ ໜຶ່ງ, ເລກ ສອງ ແລະ ຫົວໜ້າກົມກອງທຽບເທົ່າກອງພົນຂຶ້ນໄປ;

5. ຊັ້ນ ພັນເອກ: ຮອງຫົວໜ້າກົມ ທີ່ຂຶ້ນກັບກົມໃຫຍ່ ແລະ ຫ້ອງວ່າການກະຊວງ, ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຮອງປະທານສານທະຫານຂັ້ນສູງ, ຮອງຫົວໜ້າກອງພົນ, ຫົວໜ້າກອງພັນໃຫຍ່, ຫົວໜ້າທີ່ປຶກສາທູດດ້ານການທະຫານ, ຮອງຫົວໜ້າ ວິທະຍາຄານນາຍທະຫານບົກກົມມະດຳ, ວິທະຍາຄານພະລາທິການກອງທັບ, ວິທະຍາຄານເຕັກນິກການທະຫານກອງທັບ, ວິທະຍາຄານການແພດກອງທັບ, ໂຮງຮຽນທິດສະດີການເມືອງກອງທັບ, ໂຮງຮຽນກໍ່ສ້າງນາຍສິບທະຫານຮາບ ເລກ ໜຶ່ງ, ເລກ ສອງ , ໂຮງໝໍສູນກາງ 103 ກອງທັບ, ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ ທີ່ຂຶ້ນກັບກົມໃຫຍ່ ແລະ ຫ້ອງວ່າການກະຊວງ, ຮອງຫົວໜ້າກອງບັນຊາການທະຫານນະຄອນຫຼວງ, ແຂວງ, ຫົວໜ້າ ແລະ ຮອງຫົວໜ້າຄະນະວິຊາຄູ ວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ, ຫົວໜ້າຄະນະວິຊາຄູ ວິທະຍາຄານນາຍທະຫານບົກກົມມະດຳ, ວິທະຍາຄານພະລາທິການກອງທັບ, ວິທະຍາຄານເຕັກນິກການທະຫານກອງທັບ, ວິທະຍາຄານການແພດກອງທັບ, ໂຮງຮຽນທິດສະດີການເມືອງກອງທັບ, ຫົວໜ້າ ແລະ ຮອງຫົວໜ້າໂຮງຮຽນວັດທະນະທຳຊົນເຜົ່າກອງທັບ, ຫົວໜ້າອົງການໄອຍະການທະຫານພາກ, ປະທານສານທະຫານພາກ , ຫົວໜ້າກົມປ້ອງກັນຊາດ ກຳມາທິການ ປກຊ-ປກສ ສະພາແຫ່ງຊາດ, ຫົວໜ້າຫ້ອງການ ປກຊ-ປກສ ນະຄອນຫຼວງ, ແຂວງ, ຄະນະກຳມະການຍຸຕິທຳ ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ, ປະທານສະຫະພັນນັກຮົບເກົ່າຂັ້ນແຂວງ ແລະ ບັນດາຫົວໜ້າກົມກອງທີ່ທຽບເທົ່າ.

6. ຊັ້ນ ພັນໂທ: ຮອງຫົວໜ້າ, ຫົວໜ້າ ແລະ ຮອງຫົວໜ້າພະແນກຂອງກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກຂອງອົງການທີ່ຂຶ້ນກັບກົມໃຫຍ່, ຫ້ອງວ່າການກະຊວງ, ຫົວໜ້າ ແລະ ຮອງຫົວໜ້າພະແນກບັນດາກອງບັນຊາການທະຫານ ນະຄອນຫຼວງ, ແຂວງ, ຫົວໜ້າ ແລະ ຮອງຫົວໜ້າພະແນກຂອງບັນດາກອງ

ພົນທະຫານຮາບ, ຫົວໜ້າກອງພັນນ້ອຍ, ຫົວໜ້າ ແລະ ຮອງຫົວໜ້າ ກອງບັນຊາການທະຫານເມືອງ ແລະ ບັນດາກົມກອງທຽບເທົ່າ ກອງພັນນ້ອຍ, ບັນດາຕໍາແໜ່ງຮອງ ທີ່ໄດ້ກໍານົດໄວ້ໃນຂໍ້ 5 ຂອງມາດຕານີ້;

7. ຊັ້ນ ພັນຕີ: ຮອງຫົວໜ້າການທະຫານ, ຮອງຫົວໜ້າການເມືອງກອງພັນນ້ອຍ, ຮອງຫົວໜ້າບັນຊາ ແລະ ຮອງຫົວໜ້າການເມືອງກອງບັນຊາການທະຫານເມືອງ, ຫົວໜ້າການທະຫານກອງຮ້ອຍ, ຫົວໜ້າການເມືອງ ກອງຮ້ອຍ ແລະ ບັນດາກົມກອງ ທຽບເທົ່າ ກອງຮ້ອຍ;

8. ຊັ້ນ ພັນຈັດຕະວາ: ຮອງຫົວໜ້າການທະຫານກອງຮ້ອຍ, ຮອງຫົວໜ້າການເມືອງກອງຮ້ອຍ ແລະ ຮອງຫົວໜ້າບັນດາກົມກອງ ທຽບເທົ່າ ກອງຮ້ອຍ;

9. ຊັ້ນ ຮ້ອຍເອກ: ຫົວໜ້າໝວດ ແລະ ຫົວໜ້າບັນດາກົມກອງ ທຽບເທົ່າໝວດ.

ສໍາລັບ ຊັ້ນຮ້ອຍໂທ, ຮ້ອຍຕີ ແລະ ຮ້ອຍຈັດຕະວາ ນັ້ນ ແມ່ນ ນາຍທະຫານຊ່ວຍວຽກ ແລະ ມີຕໍາແໜ່ງຕໍ່າກວ່າ ຂັ້ນຮອງຫົວໜ້າໝວດ.

ຊັ້ນຂອງນາຍທະຫານ ທີ່ເຮັດໜ້າທີ່ວຽກງານພິເສດ ແລະ ເຂດຫຍຸ້ງຍາກທຸລະກັນດານ ຈະສູງກວ່າຕໍາແໜ່ງງານ.

**ມາດຕາ 29 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຂອງນາຍທະຫານ**

ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຂອງນາຍທະຫານ ມີ ດັ່ງນີ້:

1. ລັດຖະມົນຕີກະຊວງປ້ອງກັນປະເທດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ພາຍຫຼັງສະພາແຫ່ງຊາດຮັບຮອງ;

2. ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າ ແລະ ຮອງຫົວໜ້າກົມໃຫຍ່, ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ, ຫົວໜ້າວິທະຍາຄານ ປ້ອງກັນຊາດໄກສອນພົມວິຫານ, ຫົວໜ້າກົມ 213, ຫົວໜ້າຫ້ອງການຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສູນກາງ, ຫົວໜ້າກົມກວດກາກອງທັບ, ຫົວໜ້າກອງພົນ, ຫົວໜ້າກອງບັນຊາການທະຫານ ນະຄອນຫຼວງ, ແຂວງ, ຫົວໜ້າກອງບັນຊາການເຫຼົ່າຮົບ ແລະ ທຽບເທົ່າ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ;

3. ຫົວໜ້າອົງການໄອຍະການທະຫານຂັ້ນສູງ, ປະທານສານທະຫານຂັ້ນສູງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ຮັບການເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ;

4. ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານພາກ, ອົງການໄອຍະການທະຫານ ນະຄອນຫຼວງ, ແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ພາຍຫຼັງໄດ້ຮັບການເຫັນດີຈາກລັດຖະມົນຕີ ກະຊວງປ້ອງກັນປະເທດ;

5. ຮອງປະທານສານທະຫານຂັ້ນສູງ, ປະທານ ແລະ ຮອງປະທານ ສານທະຫານພາກ, ສານທະຫານ ນະຄອນຫຼວງ, ແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານທະຫານຂັ້ນສູງ ພາຍຫຼັງໄດ້ຮັບຄໍາເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ;

6. ທີ່ປຶກສາ ແລະ ຮອງທີ່ປຶກສາທູດ ຝ່າຍປ້ອງກັນຊາດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍລັດຖະມົນຕີກະຊວງການຕ່າງປະເທດ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ;

7. ຫົວໜ້າ ແລະ ຮອງຫົວໜ້າກົມ, ຮອງຫົວໜ້າວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ, ຫົວໜ້າ ແລະ ຮອງຫົວໜ້າວິທະຍາຄານ, ຮອງຫົວໜ້າກອງພົນ, ຮອງຫົວໜ້າກອງບັນຊາການທະຫານ ນະຄອນຫຼວງ, ແຂວງ, ຫົວໜ້າ ແລະ ຮອງຫົວໜ້າ ກອງພັນໃຫຍ່, ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການທະຫານ ເມືອງ

ນະຄອນ, ຫົວໜ້າ, ຮອງຫົວໜ້າກົມກອງທຽບເທົ່າ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງປ້ອງກັນປະເທດ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງກອງທັບ;

8. ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂອງອົງການຂັ້ນຕ່າງໆ, ຫົວໜ້າ ແລະ ຮອງ ຫົວໜ້າກອງພັນນ້ອຍ, ຫົວໜ້າຂະແໜງຂອງກອງພັນໃຫຍ່ເອກະລາດ, ຫົວໜ້າ ແລະ ຮອງຫົວໜ້າກົມກອງ ທຽບເທົ່າ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍຫົວໜ້າກົມໃຫຍ່ການເມືອງກອງທັບ ຕາມການສະເໜີ ຂອງກົມກອງທີ່ກ່ຽວຂ້ອງ;

9. ຫົວໜ້າກົມໃຫຍ່ເສນາທິການກອງທັບ, ຫົວໜ້າກົມໃຫຍ່ພາລາທິການກອງທັບ, ຫົວໜ້າກົມໃຫຍ່ເຕັກນິກກອງທັບ, ຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ ແລະ ຫົວໜ້າກົມກອງທຽບເທົ່າ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຂັ້ນກອງຮ້ອຍ ແລະ ຂັ້ນຂະແໜງທີ່ຂຶ້ນກັບຕົນຕາມການສະເໜີ ຂອງກົມກອງທີ່ກ່ຽວຂ້ອງ;

10. ຫົວໜ້າກອງບັນຊາການເຫຼົ່າຮົບ, ຫົວໜ້າວິທະຍາຄານປ້ອງກັນຊາດໄກສອນພົມວິຫານ, ຫົວໜ້າວິທະຍາຄານ, ຫົວໜ້າກອງພົນ, ຫົວໜ້າກອງບັນຊາການທະຫານນະຄອນຫຼວງ, ແຂວງ, ແລະ ຫົວໜ້າກົມກອງທຽບເທົ່າ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງພະນັກງານ ຂັ້ນຂະແໜງ, ກອງຮ້ອຍ, ໝວດ, ໝູ່ທີ່ຂຶ້ນກັບຕົນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ;

11. ຫົວໜ້າກອງພັນໃຫຍ່ເອກະລາດ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານຂັ້ນກອງຮ້ອຍ, ໝວດ ແລະ ໝູ່ທີ່ຂຶ້ນກັບຕົນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ.

**ມາດຕາ 30 ການປົດ ແລະ ແຕ່ງຕັ້ງນາຍທະຫານ ໃຫ້ດຳລົງຕຳແໜ່ງຊົ່ວຄາວ**

ໃນກໍລະນີຮີບດ່ວນ ນາຍທະຫານທີ່ມີຕຳແໜ່ງແຕ່ຂັ້ນຫົວໜ້າກອງຮ້ອຍເອກະລາດ, ຫົວໜ້າກອງພັນນ້ອຍເອກະລາດ, ຫົວໜ້າກອງພັນໃຫຍ່ ຫຼື ທຽບເທົ່າຂຶ້ນໄປ ມີສິດປົດຕຳແໜ່ງຊົ່ວຄາວ ນາຍທະຫານທີ່ ຂຶ້ນກັບຕົນທີ່ບໍ່ປະຕິບັດຄຳສັ່ງ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ກົມກອງ ແລະ ຜົນປະໂຫຍດຂອງຊາດ ແລ້ວແຕ່ງຕັ້ງນາຍທະຫານຜູ້ໃໝ່ຂຶ້ນຮັບຜິດຊອບແທນ, ພ້ອມກັນນັ້ນ ກໍຕ້ອງລາຍງານໃຫ້ຂັ້ນເທິງຖັດຕົນ ແລະ ສະເໜີຂັ້ນເທິງແຕ່ງຕັ້ງຢ່າງເປັນທາງການ.

**ມາດຕາ 31 (ປັບປຸງ) ການງົດຕຳແໜ່ງ ແລະ ການໃຫ້ຕຳແໜ່ງ ຕ່ຳກວ່າຊັ້ນນາຍທະຫານ**

ນາຍທະຫານ ຈະຖືກງົດຕຳແໜ່ງ ໃນກໍລະນີ ດັ່ງນີ້:

1. ກົງຈັກການຈັດຕັ້ງມີການປ່ຽນແປງ ຊຶ່ງບໍ່ຈຳເປັນຕ້ອງໃຫ້ມີຕຳແໜ່ງທີ່ກ່ຽວຂ້ອງນັ້ນອີກ;
2. ນາຍທະຫານ ບໍ່ຄົບເງື່ອນໄຂທີ່ຈະຮັບຜິດຊອບຕຳແໜ່ງນັ້ນ;
3. ນາຍທະຫານ ທີ່ມີການກະທຳຜິດທາງອາຍາ;
4. ນາຍທະຫານ ທີ່ເຖິງອາຍຸກະສຽນ ຮັບອຸດໜູນບຳນານ.

ນາຍທະຫານ ອາດຈະໄດ້ຮັບຕຳແໜ່ງຕ່ຳກວ່າຊັ້ນປັດຈຸບັນ ໃນກໍລະນີ ດັ່ງນີ້:

1. ມີການເພີ່ມທະວີການບັນຊາ ໃນການປະຕິບັດໜ້າທີ່ພິເສດ;
2. ມີການປ່ຽນແປງການຈັດຕັ້ງ ຂອງກົມກອງ;
3. ມີການສັບຊ້ອນໃສ່ຕຳແໜ່ງງານໃໝ່ທີ່ແທດເໝາະກັບຄວາມສາມາດ ແລະ ສຸຂະພາບ ຂອງຕົນ.

## ພາກທີ III
## ການປະຕິບັດນະໂຍບາຍຕໍ່ນາຍທະຫານ

**ມາດຕາ 32 (ໃໝ່) ການປະຕິບັດນະໂຍບາຍຕໍ່ນາຍທະຫານ**

ນາຍທະຫານ ໄດ້ຮັບການປະຕິບັດນະໂຍບາຍ ດັ່ງນີ້:

1. ນາຍທະຫານ ທີ່ປະຈໍາການ ໄດ້ຮັບນະໂຍບາຍອຸດໜູນຕ່າງໆ ຕາມລະບຽບການ;

2. ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະ ນາຍທະຫານບໍານານ ໄດ້ຮັບການເບິ່ງແຍງ ແລະ ນະໂຍບາຍອື່ນ ຕາມລະບຽບການ;

3. ນາຍທະຫານ ທີ່ມີການເຈັບເປັນ, ຖືກບາດເຈັບໃນເວລາເຄື່ອນໄຫວຮັບໃຊ້ສູ້ຮົບ, ສູ້ຮົບ ແລະ ປະຕິບັດໜ້າທີ່ອື່ນ ໄດ້ຮັບການປິ່ນປົວໂດຍບໍ່ເສຍຄ່າ;

4. ນາຍທະຫານ ທີ່ໄປຍົກລະດັບ ທັງພາຍໃນ ແລະ ຕ່າງປະເທດ ຕາມການອະນຸຍາດຈາກກະຊວງປ້ອງກັນປະເທດ ໄດ້ຮັບນະໂຍບາຍ ຕາມລະບຽບການ;

5. ນາຍທະຫານ ໄດ້ຮັບການອຸດໜູນການປະກັນສັງຄົມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍການປະກັນສັງຄົມ.

## ມາດຕາ 33 (ປັບປຸງ) ການຍົກຂັ້ນເງິນເດືອນ

ການຍົກຂັ້ນເງິນເດືອນນາຍທະຫານ ປະຈໍາການ ແລະ ຮັບອຸດໜູນບໍານານ ໃຫ້ປະຕິບັດ ດັ່ງນີ້:

1. ກໍານົດເວລາຄົ້ນຄວ້າພິຈາລະນາ ເລື່ອນຊັ້ນແຕ່ບໍ່ສາມາດເລື່ອນຊັ້ນໄດ້;
2. ບໍ່ມີເງື່ອນໄຂໄປຍົກລະດັບໃຫ້ສູງຂຶ້ນ ເພື່ອຮັບຕໍາແໜ່ງໃໝ່ສູງກວ່າເກົ່າ;
3. ຍົກໄດ້ແຕ່ຄັ້ງດຽວ ຕາມລໍາດັບຂັ້ນ, ຊັ້ນ;
4. ຍົກໃຫ້ນາຍທະຫານແຕ່ ຊັ້ນ ຮ້ອຍຈັດຕະວາ ເຖິງ ຊັ້ນ ພົນໂທ;
5. ຍົກຂັ້ນເງິນເດືອນ ຊັ້ນ ພັນເອກ ຂຶ້ນ ພົນຈັດຕະວາ ກໍານົດ ຫ້າ ປີ.

ສໍາລັບ ນາຍທະຫານ ທີ່ບໍ່ທັນໄດ້ຮັບການຍົກຂັ້ນເງິນເດືອນໃນເວລາປະຈໍາການ ເມື່ອເຂົ້າຮັບບໍານານແລ້ວ ຈະໄດ້ຮັບການຍົກຂັ້ນເງິນເດືອນ ຂຶ້ນອີກ ໜຶ່ງຊັ້ນ.

## ມາດຕາ 34 (ປັບປຸງ) ການຮັບອຸດໜູນບໍານານ

ນາຍທະຫານ ທີ່ຮັບອຸດໜູນບໍານານ ມີ ດັ່ງນີ້ :

1. ນາຍທະຫານ ແຕ່ຊັ້ນຮ້ອຍຈັດຕະວາ ຫາ ຮ້ອຍເອກ ມີອາຍຸ ຫ້າສິບແປດ ປີ ແລະ ມີອາຍຸການ ຊາວຫ້າ ປີ ຂຶ້ນໄປ;

2. ນາຍທະຫານ ແຕ່ຊັ້ນພັນຈັດຕະວາ ຫາ ພັນໂທ ມີອາຍຸ ຫ້າສິບແປດ ປີ ແລະ ມີອາຍຸການ ຊາວຫ້າ ປີ ຂຶ້ນໄປ;

3. ນາຍທະຫານ ແຕ່ຊັ້ນພັນເອກ ຫາ ພົນຈັດຕະວາ ມີອາຍຸ ຫົກສິບ ປີ ແລະ ມີອາຍຸການ ຊາວຫ້າ ປີ ຂຶ້ນໄປ;

4. ນາຍທະຫານ ແຕ່ຊັ້ນພົນຕີ ຫາ ພົນເອກ ມີອາຍຸ ຫົກສິບຫ້າ ປີ ແລະ ມີອາຍຸການ ຊາວຫ້າ ປີ ຂຶ້ນໄປ;

5. ສໍາລັບນາຍທະຫານ ທີ່ມີອາຍຸ ຫ້າສິບ ປີ ໄດ້ເຮັດວຽກກັບທາດເບື່ອ, ທາດເຄມີ ແລະ ກໍາມະຕະລັງສີ ເປັນເວລາ ສິບຫ້າ ປີ ຢ່າງຕໍ່ເນື່ອງ ມີສິດສະເໜີຮັບອຸດໜູນບໍານານຕາມກົດໝາຍ ແລະ ລະບຽບການ;

ນາຍທະຫານ ເມື່ອເຖິງອາຍຸກະສຽນບໍານານ ແລະ ຄົບປີການ ຮັບອຸດໜູນບໍານານ ບໍ່ຈໍາເປັນຕ້ອງຂຽນຄໍາຮ້ອງ ຊຶ່ງກົມໃຫຍ່ການເມືອງກອງທັບ ແລະ ກົມກອງທີ່ກ່ຽວຂ້ອງ ເປັນຜູ້ແຈ້ງ ແລະ ລຸລ່ວງ ເພື່ອມອບໝາຍໜ້າທີ່ໃຫ້ຜູ້ໃໝ່.

ນາຍທະຫານ ທີ່ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ເກັ່ງທາງດ້ານວິຊາການ, ວິຊາສະເພາະ, ສຸຂະພາບດີ ແລະ ມີຄວາມສະໝັກໃຈ ອາດຂະຫຍາຍອາຍຸຮັບໃຊ້ກອງທັບ ຕາມທີ່ໄດ້ກໍານົດໄວ້ໃນວັກໜຶ່ງ ຂອງມາດຕານີ້ ແຕ່ບໍ່ໃຫ້ເກີນ ຫ້າ ປີ, ກໍລະນີພິເສດ ອາດຈະແກ່ຍາວໄປໄດ້ຕື່ມອີກ.

ສໍາລັບ ນາຍທະຫານຂັ້ນສູງ ທີ່ດໍາລົງຕໍາແໜ່ງ ກໍາມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ກໍາມະການສູນກາງພັກ ແລະ ກໍາມະການສໍາຮອງສູນກາງພັກ ໃຫ້ປະຕິບັດຕາມ ມະຕິຂອງສູນກາງພັກ ວາງອອກແຕ່ລະໄລຍະ.

ນາຍທະຫານ ທີ່ບໍ່ມີເງື່ອນໄຂຮັບບໍານານ ຈະໄດ້ຮັບອຸດໜູນເທື່ອດຽວ ຕາມລະບຽບການ.

**ມາດຕາ 35 (ປັບປຸງ) ການລາພັກ ແລະ ການພັກທາງລັດຖະການ**

ການລາພັກ ແມ່ນການຂໍ ແລະ ໃຫ້ອະນຸຍາດຢຸດການປະຕິບັດໜ້າທີ່ຊົ່ວຄາວ ຂອງນາຍທະຫານ.

ການລາພັກມີ ດັ່ງນີ້:

1. ການລາພັກປະຈໍາປີ ເປັນເວລາ ສິບຫ້າວັນ ໂດຍບໍ່ນັບວັນພັກທາງລັດຖະການ. ໃນກໍລະນີມີ ພາວະສຸກເສີນ ຫຼື ພາວະຄົບຖ້ວນ ບໍ່ອະນຸຍາດໃຫ້ມີການລາພັກ, ສໍາລັບນາຍທະຫານທີ່ກໍາລັງລາພັກຢູ່ນັ້ນ ຕ້ອງໄດ້ກັບຄືນກົມກອງດ່ວນ;

2. ການລາພັກປິ່ນປົວສຸຂະພາບ ຖ້າຫາກເກີນ ຫົກເດືອນ ໃຫ້ແຕ່ງຕັ້ງນາຍທະຫານຜູ້ໃໝ່ຮັກສາການແທນ;

3. ການພັກລໍຖ້າການສັບຊ້ອນວຽກງານ ສູງສຸດ ບໍ່ໃຫ້ເກີນ ສອງເດືອນ ແຕ່ການຈັດຕັ້ງຕ້ອງຮີບຮ້ອນສັບຊ້ອນຜູ້ກ່ຽວ ເຂົ້າເຮັດວຽກງານຕາມຕໍາແໜ່ງງານທີ່ເໝາະສົມ;

4. ການລາພັກໃນກໍລະນີອື່ນ:

   4.1. ການລາພັກແຕ່ງດອງ ບໍ່ໃຫ້ເກີນເຈັດວັນ ໂດຍບໍ່ນັບວັນພັກລັດຖະການ;

   4.2. ການລາພັກເບິ່ງແຍງເມຍອອກລູກ ຫຼື ຫຼຸລູກ ບໍ່ໃຫ້ເກີນ ສິບຫ້າວັນ ໂດຍບໍ່ນັບວັນພັກລັດຖະການ;

   4.3. ການລາພັກເບິ່ງແຍງໃນເວລາເຈັບເປັນ ຫຼື ເສຍຊີວິດຂອງເມຍ ຫຼື ຜົວ, ພໍ່, ແມ່ ແລະ ລູກຂອງ ນາຍທະຫານ ບໍ່ໃຫ້ເກີນ ສິບຫ້າວັນ ໂດຍບໍ່ນັບວັນພັກລັດຖະການ;

   4.4. ການລາພັກຕິດຕາມເມຍ ຫຼື ຜົວ ທີ່ຖືກແຕ່ງຕັ້ງໄປປະຈໍາການ ຫຼື ຄົ້ນຄວ້າ ຮໍ່າຮຽນຢູ່ພາຍໃນ ຫຼື ຕ່າງປະເທດ ແຕ່ ໜຶ່ງປີ ຂຶ້ນໄປ ຕາມການຕົກລົງ ຂອງການຈັດຕັ້ງທີ່ກ່ຽວຂ້ອງ.

ສໍາລັບການພັກທາງລັດຖະການນັ້ນ ນາຍທະຫານ ຕ້ອງປະຕິບັດຕາມກົດໝາຍ, ລະບຽບການ ຫຼື ແຈ້ງການທາງລັດຖະການ.

**ມາດຕາ 36 (ປັບປຸງ) ການລາພັກອອກລູກ**

ການລາພັກອອກລູກ ຂອງນາຍທະຫານເພດຍິງ ໃຫ້ປະຕິບັດ ດັ່ງນີ້:

1. ການລາພັກອອກລູກ ເປັນເວລາ ສີ່ ເດືອນ ຊຶ່ງສາມາດພັກກ່ອນ ຫຼື ຫຼັງອອກລູກ. ໃນກໍລະນີອອກລູກດ້ວຍການຜ່າຕັດ ຫຼື ຜ່າຕັດລູກນອກພົກ ໃຫ້ພັກ ສີ່ ເດືອນເຄິ່ງ ແລະ ກໍລະນີອອກລູກແຝດ ໃຫ້ພັກຕື່ມອີກ ສອງເດືອນ;

2. ການລາພັກຫຼຸລູກ ຊຶ່ງຖືພາໄດ້ ສອງ ຫາ ສາມ ເດືອນ ໃຫ້ພັກ ໜຶ່ງ ເດືອນ, ຖືພາໄດ້ເກີນກວ່າ ສາມ ຫາ ຫ້າ ເດືອນ ຂຶ້ນໄປໃຫ້ພັກ ສອງ ເດືອນ, ຖືພາໄດ້ ຫົກ ເດືອນ ຂຶ້ນໄປ ໃຫ້ພັກ ສາມ ເດືອນເຄິ່ງ.

ໃນກໍລະນີ ນາຍທະຫານ ຫາກເອົາເດັກເກີດໃໝ່ມາເປັນລູກລ້ຽງ ທີ່ຖືກຕ້ອງຕາມກົດໝາຍ ອະນຸຍາດໃຫ້ລາພັກ ສາມ ເດືອນ.

**ມາດຕາ 37 (ປັບປຸງ) ການເສຍອົງຄະ**

ນາຍທະຫານ ທີ່ເສຍອົງຄະ ຍ້ອນຖືກບາດເຈັບຢູ່ສະໜາມຮົບ ຫຼື ເຄື່ອນໄຫວປະຕິບັດໜ້າທີ່ປ້ອງກັນຊາດ ໄດ້ຮັບການ ປິ່ນປົວໂດຍບໍ່ເສຍຄ່າ, ເບິ່ງແຍງທາງດ້ານສຸຂະພາບ ແລະ ໄດ້ຮັບນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 38 ການເສຍສະລະຊີວິດ**

ນາຍທະຫານ ທີ່ເຮັດໜ້າທີ່ສູ້ຮົບ, ຮັບໃຊ້ຢູ່ສະໜາມຮົບຢ່າງພິລະອາດຫານ ຫາກເສຍສະລະຊີວິດ ຈະໄດ້ຮັບການເລື່ອນຊັ້ນໃຫ້ຕື່ມສາມຊັ້ນ ແລະ ຄິດໄລ່ເງິນອຸດໜູນເສຍຊີວິດຕາມຊັ້ນໃໝ່ ພ້ອມທັງເບິ່ງແຍງຄອບຄົວຂອງຜູ້ກ່ຽວຕາມລະບຽບການ ແລະ ຮັບນະໂຍບາຍບຸລິມະສິດ ໃຫ້ເອົາລູກຜູ້ມີ ເງື່ອນໄຂ ແລະ ມາດຕະຖານ ເຂົ້າເປັນທະຫານ ຫຼື ການຈັດຕັ້ງຂອງລັດ ຕາມຄວາມເໝາະສົມ.

ສໍາລັບນາຍທະຫານ ທີ່ເສຍຊີວິດໃນການປະຕິບັດໜ້າທີ່ ທາງລັດຖະການ ຢູ່ເຂດຫຍຸ້ງຍາກທຸລະກັນດານ ກໍໄດ້ຮັບການເລື່ອນຊັ້ນ ໜຶ່ງຊັ້ນ ແລະ ຄິດໄລ່ເງິນອຸດໜູນເສຍຊີວິດຕາມຊັ້ນໃໝ່ ຕາມລະບຽບການ.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 39 (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ, ບໍ່ໃຫ້ການຮ່ວມມື ຕໍ່ການປະຕິບັດໜ້າທີ່ຂອງນາຍທະຫານ;
2. ປັ້ນປ່ອນ, ໝິ່ນປະໝາດ, ໃສ່ຮ້າຍປ້າຍສີ, ແບ່ງແຍກ, ມ້າງເພຄວາມສາມັກຄີ ລະຫວ່າງ ນາຍທະຫານ ແລະ ການຈັດຕັ້ງ;
3. ສວຍໃຊ້, ແອບອ້າງ ແລະ ປອມແປງ ເປັນນາຍທະຫານ;
4. ຊື້ ຂາຍ ຫຼື ນໍາໃຊ້ ເຄື່ອງແບບຂອງນາຍທະຫານ ໂດຍບໍ່ໄດ້ຮັບອະນຸຍາດ;
5. ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງ ເພື່ອແຊກແຊງ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງນາຍທະຫານ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 40 (ປັບປຸງ) ຂໍ້ຫ້າມ ສໍາລັບນາຍທະຫານ**

ຫ້າມ ນາຍທະຫານ ມີພຶດຕິກໍາ ດັ່ງນີ້:

1. ລະເມີດ ລະບຽບການຂອງກອງທັບ, ຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ຂອງເຜົ່າ;
2. ອອກຄໍາສັ່ງ, ລະບຽບການທີ່ຂັດກັບກົດໝາຍ;
3. ປະລະໜ້າທີ່ ແລະ ລະເມີດຄໍາສັ່ງຂອງຂັ້ນເທິງ;
4. ຍອມຈໍານົນ, ປະອາວຸດ, ອຸປະກອນດ້ານການທະຫານ, ເອກະສານທາງການທະຫານ ໄປມອບໃຫ້ກຸ່ມຄົນບໍ່ຫວັງດີ ຫຼື ສັດຕູ;
5. ປະຊາກສົບ ຫຼື ຜູ້ໄດ້ຮັບບາດເຈັບ ໃນເວລາສູ້ຮົບ;
6. ສວຍໃຊ້, ໜ້າທີ່, ຕໍາແໜ່ງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
7. ຂໍເອົາ, ຮຽກເອົາ, ທວງເອົາ, ໃຫ້ ຫຼື ຮັບສິນບົນ;
8. ເປີດເຜີຍຄວາມລັບຂອງລັດ ຫຼື ຄວາມລັບທາງການທະຫານ;
9. ຊື້ ຂາຍ, ທໍາລາຍ, ໃຫ້ຜູ້ອື່ນຢືມ ຫຼື ນໍາໃຊ້ ອາວຸດເສິກ ເປັນຕົ້ນ ປືນ, ກະສຸນ, ໝາກແຕກ, ຊິ້ນສ່ວນ ອາວຸດເສິກ;
10. ຊື້ ຂາຍ, ໃຫ້ຜູ້ອື່ນຢືມ ຫຼື ນໍາໃຊ້ ເຄື່ອງແບບທະຫານ, ເອກະສານທາງການທະຫານ;
11. ແບ່ງແຍກ, ມ້າງເພ ຄວາມສາມັກຄີພາຍໃນ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ພາກທີ V**

**ການຄຸ້ມຄອງ ແລະ ການກວດກາ ວຽກງານນາຍທະຫານ**

**ໝວດທີ 1**

**ການຄຸ້ມຄອງວຽກງານນາຍທະຫານ**

**ມາດຕາ 41 (ປັບປຸງ) ອົງການຄຸ້ມຄອງ ວຽກງານນາຍທະຫານ**

ລັດຖະບານ ຄຸ້ມຄອງວຽກງານນາຍທະຫານ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນປະເທດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານນາຍທະຫານ ປະກອບດ້ວຍ:

1. ກະຊວງປ້ອງກັນປະເທດ;
2. ກອງບັນຊາການທະຫານເຫຼົ່າຮົບ;
3. ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ;
4. ກອງບັນຊາການທະຫານ ເມືອງ, ນະຄອນ;
5. ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ.

**ມາດຕາ 42 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງວຽກງານນາຍທະຫານ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບນາຍທະຫານ ເພື່ອສະເໜີ ລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ແນວທາງ, ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບ ວຽກງານຄຸ້ມຄອງນາຍທະຫານ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ສຶກສາອົບຮົມ ການເມືອງ ແນວຄິດ, ແນວທາງຂອງພັກ, ນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງກອງທັບ;
4. ນຳພາ ຊີ້ນຳ, ບັນຊາ ແລະ ຄຸ້ມຄອງ ໂດຍກົງ ຮອບດ້ານ ຕໍ່ນາຍທະຫານ ໃນທົ່ວກອງທັບ;
5. ສະເໜີ ເລື່ອນຊັ້ນ, ປົດຊັ້ນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ຍ້ອງຍໍ, ລົງວິໄນ ຕໍ່ນາຍທະຫານ;
6. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຄຸ້ມຄອງນາຍທະຫານ;
7. ສ້າງ ແລະ ບຳລຸງນາຍທະຫານ ໃຫ້ເປັນລະບົບຄົບຊຸດ, ຮັບປະກັນດ້ານປະລິມານ ແລະ ຄຸນນະພາບ;
8. ນຳພາ ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງເຄື່ອນໄຫວວຽກງານ ແລະ ປະຕິບັດໜ້າທີ່ການທະຫານ;
9. ສ້າງແຜນງົບປະມານ ແລະ ນຳໃຊ້ງົບປະມານ, ວັດຖຸ, ພາຫະນະ, ອາວຸດຍຸດໂທປະກອນ ເຕັກນິກການທະຫານ;
10. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ກ່ຽວກັບວຽກງານນາຍທະຫານ;

11. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ເພື່ອຄຸ້ມຄອງວຽກງານນາຍທະຫານ;

12. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ເປັນຕົ້ນ ປະເທດເພື່ອນມິດຍຸດທະສາດ ກ່ຽວກັບວຽກງານນາຍທະຫານ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ ກ່ຽວກັບວຽກງານນາຍທະຫານ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 43 (ໃໝ່) ສິດ ແລະ ໜ້າທີ່ ຂອງກອງບັນຊາການທະຫານເຫຼົ່າຮົບ**

ໃນການຄຸ້ມຄອງວຽກງານນາຍທະຫານ ກອງບັນຊາການທະຫານເຫຼົ່າຮົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນ ແນວທາງຂອງພັກ, ນະໂຍບາຍລັດ, ມະຕິ, ຄໍາສັ່ງ, ແຜນການຂອງກະຊວງປ້ອງກັນປະເທດ ເພື່ອຜັນຂະຫຍາຍເປັນແຜນການ, ແຜນງານ ແລະ ໂຄງການຂອງຕົນແລ້ວຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

2. ໂຄສະນາ ສຶກສາອົບຮົມ ການເມືອງ ແນວຄິດ, ແນວທາງຂອງພັກ, ນະໂຍບາຍຂອງລັດ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການຂອງກອງທັບ;

3. ນໍາພາ ຊີ້ນໍາ, ບັນຊາ ແລະ ຄຸ້ມຄອງວຽກງານນາຍທະຫານ;

4. ສະເໜີ ເລື່ອນຊັ້ນ, ປົດຊັ້ນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ, ຍ້ອງຍໍ, ລົງວິໄນ ຕໍ່ນາຍທະຫານ;

5. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານນາຍທະຫານ;

6. ສ້າງແຜນການ ສ້າງ ແລະ ບໍາລຸງ ນາຍທະຫານ ໃຫ້ເປັນລະບົບຄົບຊຸດ ແລະ ປົກກະຕິ ທັງຮັບປະກັນດ້ານປະລິມານ ແລະ ຄຸນນະພາບ;

7. ນໍາພາ ຊີ້ນໍາ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງເຄື່ອນໄຫວວຽກງານ ແລະ ປະຕິບັດໜ້າທີ່ ຂອງນາຍທະຫານ;

8. ສ້າງແຜນງົບປະມານ ແລະ ຄຸ້ມຄອງ ນໍາໃຊ້ງົບປະມານ, ວັດຖຸ, ອາວຸດຍຸດໂທປະກອນ, ພາຫະນະເຕັກນິກການທະຫານ, ບໍລິຫານ ແລະ ອອກແຮງງານສ້າງພະລາທິການກັບທີ່;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ກ່ຽວກັບວຽກງານນາຍທະຫານ;

10. ປະສານສົມທົບກັບບັນດາກົມກອງ ກໍາລັງຫຼວງ ກໍາລັງທ້ອງຖິ່ນ, ອົງການປົກຄອງທ້ອງຖິ່ນ ເພື່ອຄຸ້ມຄອງວຽກງານນາຍທະຫານ;

11. ພົວພັນ ຮ່ວມມື ກັບຕ່າງປະເທດ ພາກພື້ນ ແລະ ສາກົນ ເປັນຕົ້ນ ປະເທດເພື່ອນມິດຍຸດທະສາດ ຕາມການມອບໝາຍຂອງຂັ້ນເທິງ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ໜ້າທີ່ຂອງຕົນ ຕໍ່ກະຊວງປ້ອງກັນປະເທດ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 44 (ໃໝ່) ສິດ ແລະ ໜ້າທີ່ ຂອງກອງບັນຊາການທະຫານ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານນາຍທະຫານ ກອງບັນຊາການທະຫານນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແນວທາງຂອງພັກ, ນະໂຍບາຍລັດ, ມະຕິ, ຄຳສັ່ງ, ແຜນການຂອງກະຊວງປ້ອງກັນເທດ ເພື່ອຜັນຂະຫຍາຍເປັນແຜນການ, ແຜນງານ ແລະ ໂຄງການ ຂອງຕົນແລ້ວຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

2. ໂຄສະນາ ສຶກສາອົບຮົມ ການເມືອງ ແນວຄິດ, ແນວທາງຂອງພັກ, ນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງກອງທັບ;

3. ນຳພາ ຊີ້ນຳ, ບັນຊາ ແລະ ຄຸ້ມຄອງວຽກງານນາຍທະຫານ;

4. ສະເໜີ ເລື່ອນຊັ້ນ, ປົດຊັ້ນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ຍ້ອງຍໍ, ລົງວິໄນ ຕໍ່ນາຍທະຫານ;

5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານນາຍທະຫານ;

6. ສ້າງແຜນການ ສ້າງ ແລະ ບຳລຸງ ນາຍທະຫານ ໃຫ້ເປັນລະບົບຄົບຊຸດ ແລະ ປົກກະຕິ ທັງຮັບປະກັນດ້ານປະລິມານ ແລະ ຄຸນນະພາບ;

7. ນຳພາ ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງເຄື່ອນໄຫວວຽກງານ ແລະ ປະຕິບັດໜ້າທີ່ ຂອງນາຍທະຫານ;

8. ສ້າງແຜນງົບປະມານ ແລະ ຄຸ້ມຄອງ ນຳໃຊ້ງົບປະມານ, ວັດຖຸ, ອາວຸດຍຸດໂທປະກອນ, ພາຫະນະເຕັກນິກການທະຫານ, ບໍລິຫານ ແລະ ອອກແຮງງານສ້າງພະລາທິການກັບທີ່;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ກ່ຽວກັບວຽກງານນາຍທະຫານ;

10. ປະສານສົມທົບກັບບັນດາກົມກອງ ກຳລັງຫຼວງ ກຳລັງທ້ອງຖິ່ນ, ອົງການປົກຄອງທ້ອງຖິ່ນ ເພື່ອຄຸ້ມຄອງວຽກງານນາຍທະຫານ;

11. ພົວພັນ ຮ່ວມມື ກັບປະເທດເພື່ອນມິດຍຸດທະສາດ ແລະ ປະເທດອື່ນ ຕາມການມອບໝາຍຂອງຂັ້ນເທິງ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 45 (ໃໝ່) ສິດ ແລະ ໜ້າທີ່ ຂອງກອງບັນຊາການທະຫານ ເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານນາຍທະຫານ ກອງບັນຊາການທະຫານ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແນວທາງຂອງພັກ, ນະໂຍບາຍຂອງລັດ, ມະຕິ, ຄຳສັ່ງ, ແຜນການ, ແຜນງານ, ໂຄງການ ຂອງຂັ້ນເທິງ ແລະ ຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

2. ສຶກສາອົບຮົມ ການເມືອງ ແນວຄິດ, ເຜີຍແຜ່ ແນວທາງຂອງພັກ, ນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງກອງທັບ;

3. ນຳພາ ຊີ້ນຳ, ບັນຊາ ແລະ ຄຸ້ມຄອງວຽກງານນາຍທະຫານ;

4. ສະເໜີ ເລື່ອນຊັ້ນ, ປົດຊັ້ນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ຍ້ອງຍໍ, ລົງວິໄນ ຕໍ່ນາຍທະຫານ;

5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານນາຍທະຫານ;

6. ສະເໜີ ສ້າງ ແລະ ບຳລຸງ ນາຍທະຫານ;

7. ນຳພາ ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງເຄື່ອນໄຫວວຽກງານ ແລະ ປະຕິບັດໜ້າທີ່ ຂອງນາຍທະຫານ;

8. ສ້າງແຜນງົບປະມານ ແລະ ຄຸ້ມຄອງ ນຳໃຊ້ງົບປະມານ, ວັດຖຸ, ອາວຸດຍຸດໂທປະກອນ, ພາຫະນະເຕັກນິກການທະຫານ, ບໍລິຫານ ຕາມການອະນຸມັດຂອງຂັ້ນເທິງ ແລະ ອອກແຮງງານສ້າງພະລາທິການກັບທີ່;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ກ່ຽວກັບວຽກງານນາຍທະຫານ;

10. ປະສານສົມທົບກັບບັນດາກົມກອງ ກໍາລັງຫຼວງ ກໍາລັງທ້ອງຖິ່ນ, ອົງການປົກຄອງທ້ອງຖິ່ນ ເພື່ອຄຸ້ມຄອງວຽກງານນາຍທະຫານ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 46 (ໃໝ່) ສິດ ແລະ ໜ້າທີ່ ຂອງໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ**

ໃນການຄຸ້ມຄອງວຽກງານນາຍທະຫານ ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນາຍທະຫານ;
2. ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນາຍທະຫານ;
3. ຕິດຕາມ, ຊຸກຍູ້ ໃຫ້ທ້ອງຖິ່ນຂອງຕົນ ມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ;
4. ເຂົ້າຮ່ວມໃນການໄກ່ເກ່ຍຂໍ້ຂັດແຍ່ງ ກ່ຽວກັບວຽກງານນາຍທະຫານ;
5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ກອງບັນຊາການທະຫານ ເມືອງ, ນະຄອນ ຢ່າງເປັນປົກກະຕິ;
6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ ຂອງຂັ້ນເທິງ.

## ໝວດທີ 2
## ການກວດກາ ວຽກງານນາຍທະຫານ

**ມາດຕາ 47 (ປັບປຸງ) ອົງການກວດກາ ວຽກງານນາຍທະຫານ**

ອົງການກວດກາ ວຽກງານນາຍທະຫານ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານນາຍທະຫານ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 40 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 48 (ປັບປຸງ) ເນື້ອໃນການກວດກາ**

ການກວດກາ ວຽກງານນາຍທະຫານ ມີເນື້ອໃນ ດັ່ງນີ້:

1. ການນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງນາຍທະຫານ;
2. ການປະຕິບັດ ນະໂຍບາຍຕໍ່ນາຍທະຫານ, ກົດໝາຍ, ລະບຽບການຂອງກອງທັບ;
3. ການນໍາໃຊ້ມາດຕະການຕໍ່ນາຍທະຫານ ທີ່ລະເມີດກົດໝາຍ ແລະ ລະບຽບການ;
4. ການເລື່ອນຊັ້ນ ,ເລື່ອນທຽບຊັ້ນ ,ປະດັບຊັ້ນ ແລະ ປະດັບທຽບຊັ້ນ ນາຍທະຫານ;
5. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 49 (ປັບປຸງ) ຮູບການກວດກາ**

ຮູບການກວດກາ ວຽກງານນາຍທະຫານ ມີ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງ ເປັນປົກກະຕິ, ມີກໍານົດເວລາອັນແນ່ນອນ ແລະ ຕ້ອງປະຕິບັດຢ່າງໜ້ອຍ ສອງ ຄັ້ງຕໍ່ປີ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈໍາເປັນ ແລະ ຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດໍາເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 50 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ນາຍທະຫານທີ່ມີຜົນງານດີເດັ່ນ ໃນການສູ້ຮົບ ຫຼື ການເຄື່ອນໄຫວວຽກງານ ແລະ ປະຕິບັດໜ້າທີ່ອື່ນ ຈະໄດ້ຮັບການ ຍ້ອງຍໍ ເຊັ່ນ ນາມມະຍົດວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ການເລື່ອນຊັ້ນ ກ່ອນກໍານົດ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 51 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ນາຍທະຫານ, ບຸກຄົນອື່ນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ກອງທັບ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງປະຊາຊົນລາວ, ບັນດາເຜົ່າ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

ນາຍທະຫານ ທີ່ໄດ້ລະເມີດລະບຽບການ ຂອງກອງທັບ, ຄໍາສັ່ງຂອງຜູ້ບັນຊາ ນອກຈາກຈະຖືກປະຕິບັດ ມາດຕະການຕາມວັກໜຶ່ງ ຂອງມາດຕານີ້ແລ້ວ ຍັງຈະຖືກງົດ ການເລື່ອນຊັ້ນ, ການຍ້ອງຍໍ, ໜ້າທີ່, ປົດຕໍາແໜ່ງ, ປົດຊັ້ນ, ຖອດ ອາວຸດ, ເຄື່ອງແບບ, ບັດປະຈໍາຕົວ ນາຍທະຫານ, ເອກະສານຕ່າງໆ ທີ່ກອງທັບອອກໃຫ້ ແລະ ປົດປ່ອຍອອກຈາກກອງທັບ ໂດຍໃຫ້ເງິນອຸດໜູນຕາມຊັ້ນ ຫຼື ບໍ່ໄດ້ຮັບນະໂຍບາຍໃດ ຕາມແຕ່ລະກໍລະນີ.

ນາຍທະຫານ ທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທໍາຜິດໂດຍ ເຈດຕະນາ ແຕ່ໜຶ່ງປີ ຂຶ້ນໄປ ຈະໝົດສິດໃນການເປັນນາຍທະຫານ ແລະ ບໍ່ໄດ້ຮັບນະໂຍບາຍແຕ່ຢ່າງໃດ. ໃນກໍລະນີ ຖືກລົງໂທດຍ້ອນການກະທໍາຜິດ ດ້ວຍຄວາມບໍ່ລະມັດລະວັງ ຈະໄດ້ຮັບການພິຈາລະນາຕາມຄວາມເໝາະສົມ.

## ພາກທີ VII
## ການແຕ່ງດອງ, ການຢ່າຮ້າງ, ເຄື່ອງໝາຍຊັ້ນ, ເຄື່ອງໝາຍທຽບຊັ້ນ, ເຄື່ອງໝາຍເຫຼົ່າຮົບ ແລະ ເຄື່ອງແບບສະເພາະ

**ມາດຕາ 52 (ປັບປຸງ) ການແຕ່ງດອງ ແລະ ການຢ່າຮ້າງ ຂອງນາຍທະຫານ**

ນອກຈາກ ເງື່ອນໄຂການແຕ່ງດອງທີ່ໄດ້ກຳນົດໄວ້ໃນ ປະມວນກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍທະບຽນຄອບຄົວແລ້ວ ນາຍທະຫານທີ່ຈະສ້າງຄອບຄົວ ຕ້ອງມີອາຍຸການເຂົ້າທະຫານ ສາມ ປີ ຂຶ້ນໄປ ແລະ ໄດ້ຮັບການອະນຸມັດຈາກກົມກອງຂອງຕົນ ຫຼື ກົມນະໂຍບາຍ ກົມໃຫຍ່ການເມືອງກອງທັບ ເພື່ອອອກໃບອະນຸມັດສ້າງຄອບຄົວ, ຫຼັງຈາກນັ້ນ ກໍຕ້ອງນຳເອົາໃບອະນຸມັດສ້າງຄອບຄົວຍື່ນຕໍ່ ເຈົ້າໜ້າທີ່ທະບຽນຄອບຄົວເມືອງ, ນະຄອນ ບ່ອນ ຄູ່ບ່າວສາວ, ຍິງ ຫຼື ຊາຍ ອາໄສຢູ່ ເພື່ອຈົດທະບຽນການແຕ່ງດອງ.

ໃນກໍລະນີມີການຢ່າຮ້າງ ຂອງນາຍທະຫານດ້ວຍຄວາມສະໝັກໃຈ ຫຼື ການຢ່າຮ້າງດ້ວຍການຕັດສີນຂອງສານນັ້ນ ເມຍ ຫຼື ຜົວ ຕ້ອງນຳເອົາບົດບັນທຶກການຢ່າຮ້າງ ຫຼື ຄຳຕັດສີນຂອງສານ ຍື່ນຕໍ່ກົມກອງຂອງຕົນ ຫຼື ກົມນະໂຍບາຍ ກົມໃຫຍ່ການເມືອງ ເພື່ອລົບລ້າງ ໃບອະນຸມັດສ້າງຄອບຄົວ ແລ້ວນຳຍື່ນຕໍ່ ເຈົ້າໜ້າທີ່ທະບຽນຄອບຄົວເມືອງ, ນະຄອນ ບ່ອນ ຄູ່ຜົວເມຍ, ເມຍ ຫຼື ຜົວ ອາໄສຢູ່ ເພື່ອຈົດທະບຽນການຢ່າຮ້າງ.

**ມາດຕາ 53 (ໃໝ່) ເຄື່ອງໝາຍຊັ້ນ, ເຄື່ອງໝາຍທຽບຊັ້ນ, ເຄື່ອງໝາຍເຫຼົ່າຮົບ ແລະ ເຄື່ອງແບບສະເພາະ ຂອງນາຍທະຫານ**

ນາຍທະຫານ ມີ ເຄື່ອງໝາຍຊັ້ນ, ເຄື່ອງໝາຍທຽບຊັ້ນ, ເຄື່ອງໝາຍເຫຼົ່າຮົບ ແລະ ເຄື່ອງແບບສະເພາະ ຊຶ່ງກຳນົດໃນລະບຽບການຕ່າງຫາກ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 54 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 55 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ ........... ເດືອນ......... ປີ ......... ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ສະບັບເລກທີ 43/ສພຊ, ລົງວັນທີ 14 ມິຖຸນາ 2018.

**ປະທານສະພາແຫ່ງຊາດ**